ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ກົມນໍ້າປະປາ

# ໂຄງປະກອບລາຄາຫົວໜ່ວຍ
# ວຽກງານກໍ່ສ້າງ ແລະ ປັບປຸງ ລະບົບນໍ້າປະປາ
# ເຫຼັ້ມທີ 1



ຄົ້ນຄວ້າ ແລະ ຮຽບຮຽງໂດຍ: ກົມນໍ້າປະປາ; ໂທ/ແຟກ: 021 451826

ສະໜັບສະໜູນ ຈັດພິມໂດຍ: ໂຄງການພັດທະນາຄວາມອາດສາມາດ ດ້ານການຄຸ້ມຄອງຂະແໜງນໍ້າປະປາ ໃນ ສປປ ລາວ ໄລຍະທີ 2 (MaWaSU2) ທີ່ໄດ້ຮັບການຊ່ວຍເຫຼືອລ້າຈາກອົງການໄຈກາ (JICA) ປະເທດຍີ່ປຸ່ນ

ພະຈິກ 2021

# ສາລະບານ


ສາລະບານຕາຕະລາງ ........ I

ສາລະບານຮູບພາບ ........ II

ຄໍານໍາ ........ III

1. ຄວາມເປັນມາຂອງການສ້າງລາຄາຫົວໜ່ວຍ ........ 1
   - 1.1 ຈຸດປະສົງ ........ 2
   - 1.2 ເປົ້າໝາຍ ........ 2
2. ການສ້າງໂຄງສ້າງການຄິດໄລ່ລາຄາຫົວໜ່ວຍ ........ 3
   - 2.1 ການຈັດຕັ້ງປະຕິບັດ ........ 3
   - 2.2 ຂັ້ນຕອນ ແລະ ວິທີການຄົ້ນຄວ້າ ........ 3
   - 2.3 ການກໍານົດ ແລະ ຄິດໄລ່ລາຄາຕົ້ນທຶນ ຕໍ່ໜຶ່ງຫົວໜ່ວຍ (ລາຍຈ່າຍທາງກົງ) ........ 3
   - 2.4 ການກໍານົດ ແລະ ຄິດໄລ່ຄ່າດໍາເນີນການຕໍ່ໜຶ່ງຫົວໜ່ວຍ (ລາຍຈ່າຍທາງອ້ອມ) ........ 3
   - 2.5 ຂໍ້ກໍານົດທີ່ເປັນບ່ອນອີງໃນການຄິດໄລ່ລາຄາຫົວໜ່ວຍ ........ 4
     - 2.5.1 ວັດສະດຸ ........ 4
     - 2.5.2 ພາຫະນະກົນຈັກ, ເຄື່ອງຈັກ ແລະ ອາຍຸການນໍາໃຊ້ ........ 5
     - 2.5.3 ຄ່າຂົນສົ່ງ ........ 8
     - 2.5.4 ແຮງງານ ........ 8
3. ການນໍາໃຊ້ລາຄາຫົວໜ່ວຍ ແລະ ວິທີການນໍາໃຊ້ສູດຄິດໄລ່ ........ 10
   - 3.1 ການນໍາໃຊ້ລາຄາຫົວໜ່ວຍ ........ 10
   - 3.2 ວິທີການນໍາໃຊ້ສູດຄິດໄລ່ ........ 10
     - 3.2.1 ການເກັບກໍາຂໍ້ມູນ ........ 10
     - 3.2.2 ລາຍການປະກອບ ໃບຄິດໄລ່ລາຄາ ໃນໄຟລ໌ເອເລັກໂຕຼນິກ Excel ........ 13
     - 3.2.3 ການນໍາໃຊ້ຄໍາສັ່ງໃນແຜງເມນູ ........ 14
4. ຂໍ້ກໍານົດຕ່າງໆ ........ 18
   - 4.1 ການດັດປັບຕົວປ່ຽນຂອງໂຄງສ້າງລາຄາຫົວໜ່ວຍ ........ 18
   - 4.2 ການກໍານົດລາຍການໜ້າວຽກ ໃນການຄິດໄລ່ລາຄາຫົວໜ່ວຍ ........ 18
   - 4.3 ການກໍານົດຄ່າສິ້ນເປືອງລາຍຈ່າຍ ........ 18
   - 4.4 ການກໍານົດປະເພດວັດສະດຸ ........ 19
     - 4.4.1 ການກໍານົດປະເພດຂອງຫີນ ........ 19
     - 4.4.2 ການກໍານົດປະເພດຂອງທໍ່ ........ 20
   - 4.5 ກຸ່ມລາຍການໜ້າວຽກ ........ 22
   - 4.6 ການປ່ຽນແປງ ທາງດ້ານລາຄາ ........ 22
   - 4.7 ການດັດປັບລາຄາ ........ 22
5. ຕາຕະລາງ ສັງລວມມູນຄ່າ ຂອງໂຄງການ. ........ 23
6. ຕົວຢ່າງສູດຄິດໄລ່ ........ 24
   - 6.1 ແບບຕັ້ງສູດລວມ ........ 24

6.2 ແບບຕັ້ງສູດມູນຄ່າໃຊ້ຈ່າຍຕົ້ນທຶນທາງກົງ ........ 24
6.3 ແບບຕັ້ງສູດມູນຄ່າໃຊ້ຈ່າຍຕົ້ນທຶນທາງອ້ອມ ........ 25
6.4 ແບບຕັ້ງສູດມູນຄ່າອາກອນຕ່າງໆ ........ 25
7. ສົມທຽບໃສ່ ລາຄາຫົວໜ່ວຍທີ່ຈັດຕັ້ງປະຕິບັດຜ່ານມາ ........ 26
7.1 ສົມທຽບໃສ່ ລາຄາຫົວໜ່ວຍທີ່ຈັດຕັ້ງປະຕິບັດຜ່ານມາ (ພາກເໜືອ) ........ 26
7.2 ສົມທຽບໃສ່ ລາຄາຫົວໜ່ວຍທີ່ຈັດຕັ້ງປະຕິບັດຜ່ານມາ (ພາກກາງ) ........ 31
7.3 ສົມທຽບໃສ່ ລາຄາຫົວໜ່ວຍທີ່ຈັດຕັ້ງປະຕິບັດຜ່ານມາ (ພາກໃຕ້) ........ 33
7.4 ການສົມທຽບລາຄາຫົວໜ່ວຍຈັດຕັ້ງປະຕິບັດຜ່ານມາ ຕ່ຳສຸດ, ກາງ ແລະ ສູງສຸດ (3 ພາກ) ........ 36
8. ຮູບໂຄງສ້າງຕ່າງໆ ........ 40
9. ເອກະສານອ້າງອີງ ........ 58
10. ເອກະສານທີ່ກ່ຽວຂ້ອງ ........ 59

# ສາລະບານຕາຕະລາງ

ຕາຕະລາງ 1: ປະເພດ ພາຫະນະກົນຈັກ, ເຄື່ອງຈັກ ແລະ ອາຍຸການໃຊ້ງານ. .......................................... 5
ຕາຕະລາງ 2: ຂໍ້ມູນ ແລະ ຄ່າຫຼຸ້ຍຫ້ຽນພາຫະນະກົນຈັກ ແລະ ເຄື່ອງຈັກ .............................................. 6
ຕາຕະລາງ 3: ຂໍ້ມູນກ່ຽວກັບຄ່າແຮງງານ ແລະ ເງິນເດືອນ. .............................................................. 8
ຕາຕະລາງ 4: ຕົວຢ່າງລາຄາວັດສະດຸກໍ່ສ້າງ..................................................................................... 11
ຕາຕະລາງ 5: ຕົວຢ່າງລາຄາວັດສະດຸກໍ່ສ້າງ ສໍາລັບວຽກເບຕົງເສີມເຫຼັກ ແລະ ລາຍການອື່ນໆ ...................... 12
ຕາຕະລາງ 6: ການຈາແນກການຜຸພັຍດ້ອຍຕົວມັນເອງ ຂອງຫີນ 5 ປະເພດ......................................... 19
ຕາຕະລາງ 7: ຂໍ້ດີ, ຂໍ້ເສຍ ແລະ ການກໍ່ສ້າງ ສໍາລັບວັດສະດຸທໍ່ ........................................................ 20
ຕາຕະລາງ 8: ຮູບແບບສັງລວມມູນຄ່າ ຂອງໂຄງການ .................................................................. 23
ຕາຕະລາງ 9: ສົມທຽບລາຄາຫົວໜ່ວຍທີ່ຈັດຕັ້ງປະຕິບັດຜ່ານມາ ຢູ່ພາກເໜືອ...................................... 26
ຕາຕະລາງ 10: ສົມທຽບ ລາຄາຫົວໜ່ວຍທີ່ຈັດຕັ້ງປະຕິບັດຜ່ານມາ ຢູ່ພາກກາງ..................................... 31
ຕາຕະລາງ 11: ສົມທຽບລາຄາຫົວໜ່ວຍທີ່ຈັດຕັ້ງປະຕິບັດຜ່ານມາ ຢູ່ພາກໃຕ້....................................... 33
ຕາຕະລາງ 12: ສົມທຽບລາຄາຫົວໜ່ວຍຈັດຕັ້ງປະຕິບັດຜ່ານມາ ຕໍ່າສຸດ, ກາງ ແລະ ສູງສຸດ ຂອງພາກເໜືອ, ພາກ ກາງ ແລະ ພາກໃຕ້.................................................................................. 36

## ສາລະບານຮູບພາບ

ຮູບທີ 1: ແຜງເມນູ ໂປຼແກຼມຄິດໄລ່ຂອງ Bill 2 ແລະ 10 ........ 15
ຮູບທີ 2: ແຜງເມນູ ໂປຼແກຼມຄິດໄລ່ຂອງ Bill 3 ........ 15
ຮູບທີ 3: ແຜງເມນູ ໂປຼແກຼມຄິດໄລ່ຂອງ Bill 4 ແລະ 5 ........ 16
ຮູບທີ 4: ແຜງເມນູ ໂປຼແກຼມຄິດໄລ່ຂອງ Bill 6 ........ 17
ຮູບທີ 5: ແຜງເມນູ ໂປຼແກຼມຄິດໄລ່ຂອງ Bill 7 ........ 17
ຮູບທີ 6: ແຜນຜັງໂຮງງານຜະລິດນ້ຳປະປາ ........ 40

# ຄຳນຳ

ການພັດທະນາ ວຽກງານນ້ຳປະປາ ໄດ້ມີການເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນຂອບເຂດທົ່ວປະເທດ ລາຄາຫົວໜ່ວຍວຽກງານກໍ່ສ້າງ ແລະ ປັບປຸງ ລະບົບນ້ຳປະປາ ຈຶ່ງເປັນສິ່ງຈຳເປັນໃນການຄຸ້ມຄອງ ແລະ ດັດສົມ ມູນຄ່າໂຄງການ ໃຫ້ຢູ່ໃນເກນທີ່ສົມເຫດສົມຜົນ, ປະຢັດ, ຮັບປະກັນທາງດ້ານຄຸນນະພາບ ແລະ ມີປະສິດທິຜົນສູງ, ພ້ອມທັງ ມີການຄຸ້ມຄອງລາຄາໃນການລົງທຶນຂອງ ພາກລັດ ແລະ ເອກກະຊົນ ໃຫ້ແທດເໝາະກັບຄວາມເປັນຈິງ. ໂຄງປະກອບລາຄາຫົວໜ່ວຍ ວຽກງານກໍ່ສ້າງ ແລະ ປັບປຸງ ລະບົບນ້ຳປະປາ ປະກອບມີ 3 ເຫຼັ້ມ ຄື:

ເຫຼັ້ມທີ 1: ໂຄງປະກອບລາຄາຫົວໜ່ວຍ ວຽກງານກໍ່ສ້າງ ແລະ ປັບປຸງ ລະບົບນ້ຳປະປາ ເປັນການແນະນຳ ລາຍການປະກອບລາຄາ, ແບບຕັ້ງສູດລວມ, ວິທີການຄິດໄລ່ ແລະ ຂັ້ນຕອນ ຂອງໂຄງສ້າງລາຄາຫົວໜ່ວຍ.

ເຫຼັ້ມທີ 2: ປຶດແນະນຳການນຳໃຊ້ລາຄາຫົວໜ່ວຍ ວຽກງານກໍ່ສ້າງ ແລະ ປັບປຸງ ລະບົບນ້ຳປະປາ ເປັນການ ນຳເອົາຜົນການວິເຄາະລາຄາຫົວໜ່ວຍ ຈາກຂໍ້ມູນບັນດາໂຄງການກໍ່ສ້າງລະບົບນ້ຳປະປາ ທີ່ໄດ້ຈັດຕັ້ງປະຕິບັດຜ່ານມາ ແລະ ກຳນົດເອົາລາຄາວັດສະດຸກໍ່ສ້າງ, ນ້ຳມັນເຊື້ອໄຟ, ຄ່າແຮງງານຕົວຈິງ ຄື: 1) ພາກເໜືອ: ແຂວງຫົວພັນ ເປັນຂໍ້ ມູນມາຄິດໄລ່ລາຄາ ເພື່ອເປັນບ່ອນອີງໃຫ້ແກ່ ບັນດາແຂວງພາກເໜືອ ປະກອບດ້ວຍ: ແຂວງ ຜົ້ງສາລີ, ບໍ່ແກ້ວ, ຫຼວງນ້ຳທາ, ອຸດົມໄຊ, ຫຼວງພະບາງ, ໄຊຍະບູລີ ແລະ ຊຽງຂວາງ; 2) ພາກກາງ: ນະຄອນຫຼວງວຽງຈັນ ເປັນຂໍ້ມູນ ມາຄິດໄລ່ລາຄາ ເພື່ອເປັນບ່ອນອີງໃຫ້ແກ່ ບັນດາແຂວງພາກກາງ ປະກອບດ້ວຍ: ແຂວງ ວຽງຈັນ, ໄຊສົມບູນ, ບໍລິຄຳໄຊ, ຄຳມ່ວນ ແລະ ສະຫວັນນະເຂດ ແລະ 3) ພາກໃຕ້: ແຂວງເຊກອງ ເປັນຂໍ້ມູນມາຄິດໄລ່ລາຄາ ເພື່ອເປັນ ບ່ອນອີງໃຫ້ແກ່ ບັນດາແຂວງພາກໃຕ້ ປະກອບດ້ວຍ: ແຂວງ ສາລະວັນ, ຈຳປາສັກ ແລະ ອັດຕະປື. ພ້ອມນີ້ຍັງ ປະກອບດ້ວຍວິທີການຄິດໄລ່ ໂດຍຜ່ານໂປຼແກມໄມໂຄຊອບເອັກເຊວ ເພື່ອປ້ອນຂໍ້ມູນເຂົ້າແຕ່ລະໜ້າວຽກ ທີ່ ສາມາດເລືອກປະເພດ ແລະ ລາຄາວັດສະດຸກໍ່ສ້າງ, ຄ່າແຮງງານ, ກຳນົດອັດຕາແລກປ່ຽນ ແລະ ອື່ນໆ.

ເຫຼັ້ມທີ 3: ຕົວຢ່າງການນຳໃຊ້ລາຄາຫົວໜ່ວຍເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ໂດຍເລືອກເອົາ ໂຄງການທີ່ເຫັນວ່າມີຄວາມເໝາະສົມ ເພື່ອມາກຳນົດເອົາເປັນໂຄງການຕົວຢ່າງໃນການສົມທຽບລາຄາ ກັບລາຄາກາງ ບໍລິສັດທີ່ປຶກສາຄິດໄລ່ ແລະ ລາຄາຫົວໜ່ວຍທີ່ກົມນ້ຳປະປາໄດ້ຄົ້ນຄວ້າສະເໜີນຳໃຊ້ ເພື່ອແນໃສ່ສ້າງການຄິດໄລ່ ລາຄາຫົວໜ່ວຍໃຫ້ເໝາະສົມ ທັງເປັນລາຄາທີ່ປຽບທຽບ ໃນການປະເມີນມູນຄ່າໂຄງການ, ການຂຶ້ນແຜນໂຄງການ ແລະ ການກວດກາມູນຄ່າໂຄງການ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ໂຄງປະກອບລາຄາຫົວໜ່ວຍ ວຽກງານກໍ່ສ້າງ ແລະ ປັບປຸງ ລະບົບນ້ຳປະປາສະບັບນີ້ ອາດຈະບໍ່ສົມບູນເທົ່າ ທີ່ຄວນ, ແຕ່ເຫັນວ່າມີຄວາມຈຳເປັນຕ້ອງໄດ້ນຳໃຊ້ເພື່ອເປັນບ່ອງອີງໃນການກຳນົດລາຄາກາງ. ຫຼັງຈາກນຳໃຊ້ໄປ ແລ້ວ ຫາກຍັງເຫັນວ່າມີສິ່ງໃດທີ່ບໍ່ທັນແທດເໝາະກັບສະພາບຕົວຈິງ ກະລຸນາແຈ້ງເປັນທາງການເຖິງ ກົມນ້ຳປະປາ ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອຈະໄດ້ສັງລວມຂໍ້ມູນ ແລະ ສືບຕໍ່ສະເໜີປັບປຸງຄືນ ໃຫ້ມີຄວາມສົມບູນຂຶ້ນ ເປັນແຕ່ລະໄລຍະ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ກົມນໍ້າປະປາ

ເລກທີ: 518/ຍທຂ.ກນປ

ນະຄອນຫຼວງວຽງຈັນ, ວັນທີ: 22 ຕຸລາ 2021

# ໂຄງປະກອບລາຄາຫົວໜ່ວຍ ວຽກງານ ກໍ່ສ້າງ ແລະ ປັບປຸງ ລະບົບນໍ້າປະປາ

- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 27257/ຍທຂ, ລົງວັນທີ 08 ທັນວາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມນໍ້າປະປາ;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 16221/ຍທຂ, ລົງວັນທີ 11 ສິງຫາ 2016 ວ່າດ້ວຍການແຕ່ງຕັ້ງ ຄະນະປັບປຸງລາຄາຫົວໜ່ວຍ ກິດຈະການກໍ່ສ້າງ-ສ້ອມແປງ ຂະແໜງ ໂຍທາທິການ ແລະ ຂົນສົ່ງ ແລະ ຂໍ້ຕົກລົງ ສະບັບເລກທີ 15088/ຍທຂ, ລົງວັນທີ 21 ກໍລະກົດ 2020 ວ່າດ້ວຍການແຕ່ງຕັ້ງ ຄະນະຊີ້ນໍາລວມ ແລະ ຄະນະວິຊາການຄົ້ນຄວ້າສ້າງນິຕິກໍາໃຕ້ກົດໝາຍ ວ່າດ້ວຍ ນໍ້າປະປາໃນ ສປປ ລາວ;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 1307/ຫສນຍ, ລົງວັນທີ 13 ຕຸລາ 2021 ວ່າດ້ວຍທິດຊີ້ນໍາ ກ່ຽວກັບການສະເໜີຮັບຮອງ ແລະ ອະນຸມັດໃຫ້ນໍາໃຊ້ໂຄງປະກອບລາຄາ ຫົວໜ່ວຍ ວຽກງານກໍ່ສ້າງ ແລະ ປັບປຸງລະບົບນໍ້າປະປາ;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 21121/ຍທຂ, ລົງວັນທີ 21 ຕຸລາ 2021 ວ່າດ້ວຍການຮັບຮອງ ແລະ ປະກາດນໍາໃຊ້ ໂຄງປະກອບລາຄາຫົວໜ່ວຍ ວຽກງານກໍ່ສ້າງ ແລະ ປັບປຸງ ລະບົບນໍ້າປະປາ ແລະ ບົດແນະນໍາ ການນໍາໃຊ້ລາຄາຫົວໜ່ວຍ ວຽກງານກໍ່ສ້າງ ແລະ ປັບປຸງ ລະບົບນໍ້າປະປາ.

ໂຄງປະກອບລາຄາຫົວໜ່ວຍວຽກງານ ກໍ່ສ້າງ ແລະ ປັບປຸງ ລະບົບນໍ້າປະປາ ໄດ້ຮັບຮອງ ແລະ ປະກາດໃຊ້ ເພື່ອແນໃສ່ເຮັດໃຫ້ການປະເມີນ ແລະ ການກວດກາ ມູນຄ່າຂອງໂຄງການກໍ່ສ້າງ ແລະ ປັບປຸງ ລະບົບນໍ້າປະປາ ມີຄວາມຖືກຕ້ອງເໝາະສົມ ແລະ ມີປະສິດທິຜົນສູງ, ພ້ອມທັງຮັບປະກັນການນໍາໃຊ້ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ.

## 1. ຄວາມເປັນມາຂອງການສ້າງລາຄາຫົວໜ່ວຍ

ໃນປີ 2016-2017 ກົມນໍ້າປະປາ ໄດ້ວິເຄາະການລົງທຶນ ເຂົ້າໃນການພັດທະນາ ລະບົບນໍ້າປະປາ ຂອງ ສປປ ລາວ, ເຊິ່ງພົວພັນເຖິງການພັດທະນາລາຄາຫົວໜ່ວຍ ໂດຍການວິເຄາະຕາມລະດັບການລົງທຶນທີ່ຜ່ານມາ ແຕ່ປີ 2008 ຫາ 2016 ແລະ ຄົ້ນຄວ້າຫາຄວາມເປັນໄປໄດ້ ເຖິງການພັດທະນາບົດແນະນໍາການລົງທຶນ ຫຼື ລາຄາມາດຕະຖານສໍາລັບນັກວາງແຜນໃນຂະແໜງນໍ້າປະປາ ແລະ ໄດ້ປັບປຸງລາຄາຫົວໜ່ວຍທີ່ໄດ້ຈັດຕັ້ງປະຕິບັດຜ່ານມາ ໂດຍມີການປຽບທຽບລາຄາການປະມູນໂຄງການຕ່າງໆ ຈາກຫຼາຍແຫຼ່ງທຶນ ແລະ ຮູບແບບລາຍລະອຽດ ລະບົບໂຄງ

ລ່າງນ້ຳປະປາ.

ປີ 2018-2021 ການຄົ້ນຄວ້າລາຄາຫົວໜ່ວຍວຽກງານ ກໍ່ສ້າງ ແລະ ປັບປຸງ ລະບົບນ້ຳປະປາຄັ້ງນີ້ ໄດ້ອີງໃສ່ການສ້າງໂຄງສ້າງລາຄາ ແລະ ລາຄາຫົວໜ່ວຍ ໂດຍເກັບກຳເອົາລາຄາວັດສະດຸກໍ່ສ້າງ ຕາມທ້ອງຕະຫຼາດ ຂອງແຕ່ລະຂົງເຂດທີ່ມີຈຸດພິເສດ, ສະພາບແວດລ້ອມ, ຈຸດທີ່ຕັ້ງພູມສັນຖານ ແລະ ເງື່ອນໄຂອື່ນໆ ທີ່ກ່ຽວພັນກັບ ການສິ້ນເປືອງຕ່າງໆ ໃນການເຮັດກິດຈະການໃດໜຶ່ງ.

ນອກຈາກການເກັບກຳຕົວປະກອບ ທີ່ກ່າວມາຂ້າງເທິງນັ້ນແລ້ວ ຍັງໄດ້ເກັບກຳເອົາຂໍ້ມູນທີ່ກ່ຽວຂ້ອງເຊັ່ນ: ອັດຕາແລກປ່ຽນລະຫວ່າງ ສະກຸນເງິນກີບ ແລະ ສະກຸນເງິນຕາຕ່າງປະເທດ, ລາຄາສິນຄ້າ ຫຼື ວັດສະດຸທີ່ນຳເຂົ້າ, ຄ່າຂົນສົ່ງ ແລະ ບັນດາດັດສະນີຕ່າງໆເຖິງສະໜາມກໍ່ສ້າງ ຄື: ພາຫະນະກົນຈັກ, ວັດສະດຸກໍ່ສ້າງ ແລະ ແຮງງານ ເປັນຕົ້ນ.

## 1.1 ຈຸດປະສົງ

ຈຸດປະສົງຂອງ ໂຄງປະກອບລາຄາຫົວໜ່ວຍ ວຽກງານ ກໍ່ສ້າງ ແລະ ປັບປຸງ ລະບົບນ້ຳປະປາ ແມ່ນເພື່ອເປັນການສ້າງ ແລະ ແກ້ໄຂຄືນກ່ຽວກັບລາຄາຫົວໜ່ວຍ ທີ່ເຫັນວ່າຍັງບໍ່ທັນສອດຄ່ອງ ແລະ ແທດເໝາະກັບສະພາບຄວາມເປັນຈິງໃນປັດຈຸບັນ, ຍ້ອນສະພາບເສດຖະກິດມີການເໜັງຕີງ ເຮັດໃຫ້ລາຄາສິນຄ້າຕາມທ້ອງຕະຫຼາດ ມີການປ່ຽນແປງ ຂຶ້ນ-ລົງ ເມື່ອທຽບໃສ່ສະພາບຂອງຊຸມປີທີ່ຜ່ານມາ ເຊັ່ນ: ລາຄາວັດສະດຸກໍ່ສ້າງ, ນ້ຳມັນເຊື້ອໄຟ ແລະ ອັດຕາແລກປ່ຽນເປັນຕົ້ນ.

ການຄິດໄລ່ໂຄງສ້າງລາຄາ ແລະ ລາຄາຫົວໜ່ວຍວຽກງານ ກໍ່ສ້າງ ແລະ ປັບປຸງ ລະບົບນ້ຳປະປາ ໃນຄັ້ງນີ້ ແມ່ນຖືເອົາທິດສະດີ ແລະ ບົດຮຽນຕົວຈິງມາເປັນພື້ນຖານໃນການຄົ້ນຄວ້າ ຊຶ່ງສາມາດຄິດໄລ່ຄຳນວນອອກມາໄດ້ຢ່າງຊັດເຈນ, ໃນໜຶ່ງຫົວໜ່ວຍປະກອບດ້ວຍລາຄາທາງກົງໄດ້ແກ່: ຄ່າຊັບພະຍາກອນທຳມະຊາດ, ວັດສະດຸ, ກົນຈັກ, ແຮງງານ ແລະ ນ້ຳມັນເຊື້ອໄຟ; ລາຄາທາງອ້ອມໄດ້ແກ່: ຄ່າບໍລິຫານ, ກຳໄລບວກຄວາມສ່ຽງ ແລະ ອາກອນມູນຄ່າເພີ່ມ ເປັນຕົ້ນ.

## 1.2 ເປົ້າໝາຍ

ເປົ້າໝາຍຂອງການຄິດໄລ່ ໂຄງປະກອບລາຄາຫົວໜ່ວຍວຽກງານ ກໍ່ສ້າງ ແລະ ປັບປຸງ ລະບົບນ້ຳປະປາ ແມ່ນເພື່ອເຮັດໃຫ້ການນຳໃຊ້ລາຄາຫົວໜ່ວຍ ມີຄວາມເປັນເອກະພາບກັນໃນແຕ່ລະຂົງເຂດທົ່ວປະເທດ, ມີຄວາມຖືກຕ້ອງ ເໝາະສົມ ຊັດເຈນ ເປັນທຳກັບທຸກຝ່າຍ, ເຮັດໃຫ້ລາຄາຫົວໜ່ວຍໃກ້ຄຽງກັບຄວາມເປັນຈິງ, ໃຫ້ລາຄາຫົວໜ່ວຍເປັນມາດຕະຖານດຽວກັນ ແລະ ຍັງສາມາດປຽບທຽບໃສ່ກັບບັນດາປະເທດເພື່ອນມິດໃກ້ຄຽງ. ເຊິ່ງໄດ້ກຳນົດເປັນ 3 ພາກ ທີ່ມີສະພາບພູມສັນຖານທີ່ແຕກຕ່າງກັນຄື: ພາກເໜືອ, ພາກກາງ ແລະ ພາກໃຕ້, ເຊິ່ງແຕ່ລະພາກໄດ້ກຳນົດເອົາບັນດາແຂວງທີ່ມີພູມສັນຖານໃກ້ຄຽງກັນ ເພື່ອເປັນບ່ອນອີງໃນການປະເມີນມູນຄ່າເບື້ອງຕົ້ນ ແລະ ເປັນບ່ອນອີງໃນການສົມທຽບມູນຄ່າຂອງໂຄງການ ໃນການຂຶ້ນແຜນຂໍງົບປະມານຈາກພາຍໃນ ຫຼື ຕ່າງປະເທດ, ສ່ວນລາຄາທີ່ແທ້ຈິງຂອງໂຄງການ ຕ້ອງແມ່ນລາຄາທີ່ໄດ້ຜ່ານການປະມູນ ໂດຍປະຕິບັດຕາມກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ບົດແນະນຳ ການຈັດຕັ້ງປະຕິບັດ ກົດໝາຍ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ຫຼື ຕ້ອງເປັນລາຄາທີ່ໄດ້ຕໍ່ລອງກັນ ຫຼື ເປັນເອກະພາບກັນທັງສອງຝ່າຍຕາມສູດຄິດໄລ່ລາຄາຫົວໜ່ວຍສະບັບນີ້.

## 2. ການສ້າງໂຄງສ້າງການຄິດໄລ່ລາຄາຫົວໜ່ວຍ

### 2.1 ການຈັດຕັ້ງປະຕິບັດ

ກະຊວງ ໂຍທາທິການ ແລະ ຂົນສົ່ງ ໄດ້ອອກຂໍ້ຕົກລົງ ແຕ່ງຕັ້ງຄະນະປັບປຸງລາຄາຫົວໜ່ວຍ ກິດຈະການຂອງຂະແໜງການ ໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 16221/ຍທຂ, ລົງວັນທີ 11 ສິງຫາ 2016.

ຄະນະດັ່ງກ່າວໄດ້ພ້ອມກັນຄົ້ນຄວ້າ, ປັບປຸງຕາມພາລະບົດບາດຂອງໃຜລາວ ດ້ວຍຄວາມຮັບຜິດຊອບສູງ ໂດຍອີງໃສ່ໂຄງປະກອບລາຄາຫົວໜ່ວຍການກໍ່ສ້າງທີ່ຜ່ານມາ ເປັນພື້ນຖານໃນການຄິດໄລ່ບວກກັບການຖອດຖອນບົດຮຽນ, ຈາກປະສົບການຕົວຈິງໃນພາກສະໜາມ ແລະ ເງື່ອນໄຂອື່ນໆ ມາເປັນຕົວກຳນົດ ເພື່ອປະກອບເຂົ້າໃນສູດການຄິດໄລ່ໂຄງສ້າງລາຄາຫົວໜ່ວຍດັ່ງກ່າວ.

### 2.2 ຂັ້ນຕອນ ແລະ ວິທີການຄົ້ນຄວ້າ

1. ສ້າງ ໂຄງສ້າງການຄິດໄລ່ລາຄາຫົວໜ່ວຍ ແມ່ນໄດ້ຄິດໄລ່ຈາກຄ່າສິ້ນເປືອງຕ່າງໆ ເຊິ່ງປະກອບດ້ວຍຄ່າໃຊ້ຈ່າຍທາງກົງ ແລະ ທາງອ້ອມ, ຄ່າອາກອນມູນຄ່າເພີ່ມ, ຄ່າຊົບພະຍາກອນທຳມະຊາດ ທີ່ໄດ້ປະກອບເຂົ້າເປັນໂຄງສ້າງການຄິດໄລ່ ເຊິ່ງສາມາດປ່ຽນແປງໄດ້ ຕາມການເໜັງຕີງຂອງລາຄາວັດສະດຸກໍ່ສ້າງ, ອຸປະກອນທໍ່, ອຸປະກອນກົນຈັກ, ອຸປະກອນໄຟຟ້າ, ຄ່າຂົນສົ່ງ, ຄ່າແຮງງານ ແລະ ອື່ນໆ;
2. ເກັບກຳເອົາລາຄາວັດສະດຸກໍ່ສ້າງ ແລະ ຄ່າຂົນສົ່ງ ຕາມທ້ອງຕະຫຼາດຂອງ 3 ແຂວງ ທີ່ເປັນຕົວແທນ ເພື່ອສະໜອງຂໍ້ມູນການຄິດໄລ່ໃຫ້ແກ່ 3 ພາກ (ປີ 2020);
3. ເກັບກຳເອົາຂໍ້ມູນອັດຕາແລກປ່ຽນເງິນຕາ ຈາກທະນາຄານການຄ້າຕ່າງປະເທດລາວ (ອັດຕາແລກປ່ຽນປີ 2020);
4. ເອົາຄ່າແຮງງານຕາມແຈ້ງການຂອງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ຄ່າແຮງງານຕົວຈິງຂອງແຕ່ລະແຂວງ (3 ແຂວງ);
5. ປ້ອນຂໍ້ມູນກ່ຽວຂ້ອງທັງໝົດເຂົ້າໃສ່ສູດຄິດໄລ່ລາຄາຫົວໜ່ວຍ ແລ້ວອອກເປັນລາຄາຫົວໜ່ວຍຂອງແຕ່ລະພາກ;
6. ໄດ້ຈັດຕັ້ງກອງປະຊຸມທາບທາມຄຳຄິດເຫັນ ຈາກພາກສ່ວນວິຊາການທີ່ກ່ຽວຂ້ອງ, ບັນດາກົມອ້ອມຂ້າງກະຊວງ, ພະແນກ ໂຍທາທິການ ແລະ ຂົນສົ່ງ ທົ່ວປະເທດ, ລັດວິສາຫະກິດນ້ຳປະປາ ທົ່ວປະເທດ ແລະ ຜູ້ປະກອບການ ກໍ່ສ້າງ ແລະ ປັບປຸງ ລະບົບນ້ຳປະປາ.

### 2.3 ການກຳນົດ ແລະ ຄິດໄລ່ລາຄາຕົ້ນທຶນ ຕໍ່ໜຶ່ງຫົວໜ່ວຍ (ລາຍຈ່າຍທາງກົງ)

1. ກຳນົດລາຍການໜ້າວຽກ; ກຳນົດບໍລິມາດວັດສະດຸກໍ່ສ້າງ, ການຍົກຍໍ, ລາກແກ່, ຖອກເທ ລວມທັງການຜະລິດ ແລະ ການຕິດຕັ້ງ; ກຳນົດຈຳນວນພາຫະນະກົນຈັກ ແລະ ອຸປະກອນຕ່າງໆ ທີ່ຈະນຳໃຊ້ເຂົ້າໃນໜ້າວຽກນັ້ນໆ ແລະ ກຳນົດຈຳນວນວິຊາການ, ແຮງງານ ທີ່ໄດ້ບັນຈຸເຂົ້າໃນການຜະລິດຕໍ່ໜຶ່ງຫົວໜ່ວຍໜ້າວຽກ;
2. ສັງລວມຄ່າສິ້ນເປືອງແຕ່ລະລາຍການ ຂອງໜ້າວຽກນັ້ນໆ ແລ້ວຫານໃຫ້ບໍລິມາດທີ່ປະຕິບັດໄດ້ຕາມໜ້າວຽກ ຈຶ່ງເປັນລາຄາຕົ້ນທຶນຕໍ່ໜຶ່ງຫົວໜ່ວຍ.

### 2.4 ການກຳນົດ ແລະ ຄິດໄລ່ຄ່າດຳເນີນການຕໍ່ໜຶ່ງຫົວໜ່ວຍ (ລາຍຈ່າຍທາງອ້ອມ)

1. ຄ່າໃຊ້ຈ່າຍທາງອ້ອມ ລວມມີ 2 ລາຍການ ເທົ່າກັບ 23% ຂອງລາຍຈ່າຍທາງກົງໄດ້ແກ່:
   1) ຄ່າຄຸ້ມຄອງບໍລິຫານ ກຳນົດ 10% ຂອງລາຍຈ່າຍທາງກົງ;
   2) ຄ່າກຳໄລບວກກັບຄວາມສ່ຽງ ກຳນົດ 13% ຂອງລາຍຈ່າຍທາງກົງ ໃນນີ້ :
      – ຄ່າກຳໄລ ແມ່ນອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ,

ລົງວັນທີ 15 ທັນວາ 2015 ພາກທີ IV ໝວດທີ 1 ອາກອນຊົມໃຊ້ ມາດຕາ 32 ການຄິດໄລ່ ອາກອນກໍາໄລແບບບັງຄັບ ແລະ ມາດຕາ 33 (ໃໝ່) ການກໍານົດອັດຕາສ່ວນກໍາໄລລວມແຕ່ລະ ປະເພດກິດຈະການ ຂໍ້ (ຄ) ກິດຈະການ ການບໍລິການ ຂໍ້ 2 ນ້ອຍ ກິດຈະກໍ່ສ້າງ ແລະ ປັບປຸງ ລະບົບນໍ້າປະປາ ແມ່ນກໍານົດ 10%;

– ຄວາມສ່ຽງໄດ້ກໍານົດ 3% ຂອງລາຍຈ່າຍທາງກົງ.

2. ຄ່າອາກອນຕ່າງໆໄດ້ແກ່: ຄ່າອາກອນມູນຄ່າເພີ່ມ (ອມພ) 9,09% ຂອງລາຍຈ່າຍທາງກົງ ບວກລາຍຈ່າຍ ທາງອ້ອມ (ຄ່າບໍລິຫານ, ຄ່າກໍາໄລ ແລະ ຄວາມສ່ຽງ) ຕາມສູດການຄິດໄລ່ ໃນການເກັບຄ່າພາສີ-ອາກອນ ຂອງກົມສ່ວຍສາອາກອນ, ກະຊວງການເງິນ;

**ຕົວຢ່າງ:** ອມພ $=$ ມູນຄ່າ $\times (100/110) \times 10\% =$ ມູນຄ່າ $\times 9{,}09\%$

3. ເພື່ອຄວາມສະດວກ ແລະ ວ່ອງໄວ ໃນການນໍາໄປໃຊ້ທາງພາກປະຕິບັດ ຈຶ່ງໄດ້ຄິດໄລ່ລວມ ຄ່າໃຊ້ຈ່າຍ ທັງໝົດ ແລ້ວກໍານົດໄວ້ໃນຕາຕະລາງຄ່າດໍາເນີນການຂອງແຕ່ລະໜ້າວຽກ ຄືເອົາລາຍຈ່າຍທາງກົງ ຄູນກັບ 23% ເປັນລາຍຈ່າຍທາງອ້ອມ ແລ້ວເອົາຜົນລວມລາຍຈ່າຍທາງກົງ ກັບທາງອ້ອມ ມາຄູນກັບ 10% ເປັນ ຄ່າອາກອນມູນຄ່າເພີ່ມຂອງແຕ່ລະໜ້າວຽກ, ແລ້ວຈຶ່ງເອົາຜົນຂອງທັງ 3 ລາຍການບວກກັນ ຈຶ່ງເປັນລາຄາ ຫົວໜ່ວຍໜຶ່ງ.

**ຕົວຢ່າງ:**

| | | |
|---|---|---|
| ຄ່າຕົ້ນທຶນທາງອ້ອມ | (IC) | = ຄ່າຕົ້ນທຶນທາງກົງ (DC) × 23% |
| ຄ່າຕົ້ນທຶນທັງໝົດ | (C) | = DC + IC |
| ຄ່າອາກອນມູນຄ່າເພີ່ມ | (D) | = C × 10% |

## 2.5 ຂໍ້ກໍານົດທີ່ເປັນບ່ອນອີງໃນການຄິດໄລ່ລາຄາຫົວໜ່ວຍ

### 2.5.1 ວັດສະດຸ

ສໍາລັບ ລາຄາວັດສະດຸນໍາເຂົ້າ ແມ່ນອີງໃສ່ລາຄາທີ່ ກະຊວງອຸດສາຫະກໍາ ແລະ ການຄ້າ ໄດ້ກໍານົດເຊັ່ນ: ເຫຼັກ, ຊີມັງ, ຄ່າຂົນສົ່ງ ເປັນຕົ້ນ. ສ່ວນວັດສະດຸພາຍໃນທີ່ບໍ່ໄດ້ນໍາເຂົ້າ ແມ່ນອີງໃສ່ລາຄາຕາມທ້ອງຕະຫຼາດຂອງແຂວງ ຕົວແທນແຕ່ລະພາກເປັນຜູ້ສະໜອງໃຫ້ເຊັ່ນ: ພາກເໜືອ ແຂວງຫົວພັນ, ພາກກາງ ນະຄອນຫຼວງວຽງຈັນ ແລະ ພາກໃຕ້ ແຂວງເຊກອງ ມາເປັນຂໍ້ມູນພື້ນຖານໃນການຄິດໄລ່ລາຄາຫົວໜ່ວຍຂອງ 3 ພາກ.

ສໍາລັບວັດສະດຸທໍາມະຊາດທີ່ນໍາມາກໍ່ສ້າງໃນໂຄງການ ເຊັ່ນ: ດິນ, ຫີນ ແລະ ຊາຍ ແມ່ນໄດ້ບວກຄ່າ ຊັບພະຍາກອນທໍາມະຊາດເຂົ້ານໍາ ຕາມລັດຖະບັນຍັດ ຂອງປະທານປະເທດ ສະບັບເລກທີ 001/ປປທ, ລົງວັນທີ 15 ທັນວາ 2018 ວ່າດ້ວຍອັດຕາຄ່າຊັບພະຍາກອນທໍາມະຊາດດັ່ງນີ້:

| | |
|---|---|
| 1) ດິນແດງ | ເກັບອັດຕາ 3.000 ກີບ/ແມັດກ້ອນ. |
| 2) ຊາຍ | ເກັບອັດຕາ 4.000 ກີບ/ແມັດກ້ອນ. |
| 3) ຫີນຫາດ ຫຼື ຫີນພູ | ເກັບອັດຕາ 5.000 ກີບ/ແມັດກ້ອນ. |

ສ່ວນບໍລິມາດຂອງແຕ່ລະລາຍການ ແມ່ນໄດ້ ບວກ ເພີ່ມອັດຕາສ່ວນຄ່າຍຸບຕົວຂອງວັດສະດຸແຕ່ລະປະເພດ ເຂົ້າ ແຕ່ 10 ຫາ 40% (ຕາມຄຸນສົມບັດຂອງວັດສະດຸແຕ່ລະປະເພດ).

### 2.5.2 ພາຫະນະກົນຈັກ, ເຄື່ອງຈັກ ແລະ ອາຍຸການນຳໃຊ້

ພາຫະນະກົນຈັກ ແລະ ເຄື່ອງຈັກ ໄດ້ຈັດແບ່ງອອກເປັນ 4 ປະເພດ ດັ່ງຕາຕະລາງລຸ່ມນີ້:

**ຕາຕະລາງ 1**: ປະເພດ ພາຫະນະກົນຈັກ, ເຄື່ອງຈັກ ແລະ ອາຍຸການໃຊ້ງານ.

| ພາຫະນະກົນ ແລະ ເຄື່ອງຈັກ | ອາຍຸການໃຊ້ງານ (ປີ) |
|---|---|
| 1. ປະເພດ ກົນຈັກໜັກ ໄດ້ແກ່: ລົດຈົກ, ລົດຕັກ ແລະ ລົດກວາດ | 7 |
| 2. ປະເພດ ກົນຈັກເບົາ ໄດ້ແກ່: ລົກຍົກ, ລົດລາກ, ລົດດາມ, ລົດບັນທຸກ, ລົດນ້ຳ, ລົດສີດເບຕົງ ແລະ ເຄື່ອງຊີເຈາະນ້ຳບາດານ | 8 |
| 3. ປະເພດ ເຄື່ອງຈັກ ໄດ້ແກ່: ຈັກໄຟຟ້າ, ຈັກສູບນ້ຳ, ຈັກລົມ, ຈັກຊີເຈາະ | 6 |
| 4. ປະເພດ ໂຮງງານ ຫຼື ໂຮງໂມ້ ໄດ້ແກ່: ໂຮງງານຜະລິດຫີນ, ໂຮງງານຜະລິດເບຕົງ | 4 |

**ໝາຍເຫດ:** ຂໍ້ມູນຂ້າງເທິງ ອີງຕາມ ປຶ້ມຄູ່ມື ແນະນຳການນຳໃຊ້ ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງ ຂົວ-ທາງ ຂອງ ກົມຂົວທາງ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 30305/ຍທຂ.ກຂທ, ລົງວັນທີ 19 ພະຈິກ 2019.

ສຳລັບດັດສະນີຂອງພາຫະນະກົນຈັກ ແລະ ເຄື່ອງຈັກ ໄດ້ມາຈາກການຄິດໄລ່ ໂດຍເອົາ ລາຄາຊື້ກົນຈັກ ລົບຄ່າຊາກ (ເຊິ່ງຄ່າຊາກຂອງພາຫະນະ ແລະ ເຄື່ອງຈັກໄດ້ກຳນົດ 8% ຂອງມູນຄ່າຊື້). ສາລັບ ຄ່າກວດເຊັກ ແລະ ສ້ອມແປງ ກຳນົດດັ່ງນີ້:

1) ຄ່າກວດເຊັກປະຈຳ ກຳນົດ 10% ຂອງຄ່າຫຼູ້ຍຫ້ຽນ.
2) ຄ່າສ້ອມແປງນ້ອຍ ກຳນົດ 12% ຂອງຄ່າຫຼູ້ຍຫ້ຽນ.
3) ຄ່າສ້ອມແປງໃຫຍ່ ກຳນົດ 15% ຂອງຄ່າຫຼູ້ຍຫ້ຽນ.

ຫຼັງຈາກນັ້ນ, ຈິ່ງແຍກອອກມາເປັນເດືອນ, ເປັນມື້ ແລະ ເປັນຊົ່ວໂມງ ຂອງແຕ່ລະປະເພດກົນຈັກນັ້ນໆ ຈິ່ງໄປບວກກັບ ຄ່າຂົນສົ່ງ, ຄ່າແຮງງານຄົນຂັບ-ຜູ້ຊ່ວຍຄົນຂັບ ແລະ ຄ່າໃຊ້ຈ່າຍອື່ນໆທີ່ມີ, ຈິ່ງອອກມາເປັນຄ່າສິ້ນເປືອງທັງໝົດ ຂອງພາຫະນະກົນຈັກແຕ່ລະປະເພດ ເຂົ້າເປັນລາຄາຫົວໜ່ວຍຕົ້ນທຶນຕໍ່ໜຶ່ງຫົວໜ່ວຍ ຂອງແຕ່ລະລາຍການໜ້າວຽກ.

ສຳລັບເວລາການເຮັດວຽກຂອງກົນຈັກໃນໜຶ່ງປີ ແມ່ນກຳນົດເອົາ 9 ເດືອນ, ໜຶ່ງເດືອນ 22 ມື້ ແລະ ໜຶ່ງມື້ 8 ຊົ່ວໂມງ ເທົ່າກັບ 198 ມື້ຕໍ່ປີ ຫຼື ເທົ່າກັບ 1.584 ຊົ່ວໂມງຕໍ່ປີ ດັ່ງຕາຕະລາງລຸ່ມນີ້:

**ຕາຕະລາງ 2:** ຂໍ້ມູນ ແລະ ຄ່າຫຼຸ້ຍຫ້ຽນພາຫະນະກົນຈັກ ແລະ ເຄື່ອງຈັກ

| ລໍາດັບ | ຊື່ຂອງພາຫະນະ | ລາຄາຊື້ (ໂດລາ ສະຫະລັດ) | ລາຄາຊື້ (ກີບ) | ຫັກຄ່າຊາກ (ກີບ) | ມູນຄ່າຍັງເຫຼືອທີ່ຈະຫັກຄ່າຫຼຸ້ຍຫ້ຽນ (ກີບ) | ຫັກຄ່າຫຼຸ້ຍຫ້ຽນເປັນ | | | |
|---|---|---|---|---|---|---|---|---|---|
| | | | | | | ຕໍ່ປີ (ກີບ) | ຕໍ່ເດືອນ (ກີບ) | ຕໍ່ວັນ (ກີບ) | ຕໍ່ຊົ່ວໂມງ (ກີບ) |
| **I** | **ປະເພດເຄື່ອງກົນຈັກໜັກ** | | | | | | | | |
| 1 | ລົດດຸດ | 399.000 | 3.431.400.000 | 274.512.000 | 3.156.888.000 | 394.611.000 | 43.845.667 | 1.992.985 | 249.123 |
| 2 | ລົດຈົກຕີນເຫຼັກ | 130.000 | 1.118.000.000 | 89.440.000 | 1.028.560.000 | 128.570.000 | 14.285.556 | 649.343 | 81.168 |
| 3 | ລົດຈົກຕີນເຫຼັກ 0.8 ແມັດກ້ອນ | 115.000 | 989.000.000 | 79.120.000 | 909.880.000 | 113.735.000 | 12.637.222 | 574.419 | 71.802 |
| 4 | ລົດໂລຕີນເຫຼັກສັ່ນສະເທືອນ | 95.000 | 817.000.000 | 65.360.000 | 751.640.000 | 107.377.143 | 11.930.794 | 542.309 | 67.789 |
| 5 | ລົດໂລຕີນເຫຼັກກ້ຽງ | 60.000 | 516.000.000 | 41.280.000 | 474.720.000 | 67.817.143 | 7.535.238 | 342.511 | 42.814 |
| 6 | ລົດໂລຕີນຢາງ | 65.000 | 559.000.000 | 44.720.000 | 514.280.000 | 73.468.571 | 8.163.175 | 371.053 | 46.382 |
| 7 | ລົດໂລ Combined | 40.000 | 344.000.000 | 27.520.000 | 316.480.000 | 45.211.429 | 5.023.492 | 228.341 | 28.543 |
| 8 | ລົດຍົກ 25 ໂຕນ | 150.000 | 1.290.000.000 | 103.200.000 | 1.186.800.000 | 148.350.000 | 16.483.333 | 749.242 | 93.655 |
| 9 | ລົດຍົກ 15 ໂຕນ | 110.000 | 946.000.000 | 75.680.000 | 870.320.000 | 108.790.000 | 12.087.778 | 549.444 | 68.681 |
| 10 | ລົດລາກ | 100.000 | 860.000.000 | 68.800.000 | 791.200.000 | 98.900.000 | 10.988.889 | 499.495 | 62.437 |
| **II** | **ປະເພດເຄື່ອງຈັກເບົາ** | | | | | | | | |
| 1 | ລົດຂົນສົ່ງຕິດເຄື່ອງຍົກ 3 ໂຕນ | 95.000 | 817.000.000 | 65.360.000 | 751.640.000 | 93.955.000 | 10.439.444 | 474.520 | 59.315 |
| 2 | ລົດສົ່ງນໍ້າມັນ | 65.000 | 559.000.000 | 44.720.000 | 514.280.000 | 64.285.000 | 7.142.778 | 324.672 | 40.584 |
| 3 | ລົດສົ່ງນໍ້າ | 65.000 | 559.000.000 | 44.720.000 | 514.280.000 | 64.285.000 | 7.142.778 | 324.672 | 40.584 |
| 4 | ລົດດາມ 12 ລໍ້ | 85.000 | 731.000.000 | 58.480.000 | 672.520.000 | 84.065.000 | 9.340.556 | 424.571 | 53.071 |
| 5 | ລົດດາມ 10 ລໍ້ | 70.000 | 602.000.000 | 48.160.000 | 553.840.000 | 69.230.000 | 7.692.222 | 349.646 | 43.706 |
| 6 | ລົດດາມ 6 ລໍ້ | 60.000 | 516.000.000 | 41.280.000 | 474.720.000 | 59.340.000 | 6.593.333 | 299.697 | 37.462 |
| 7 | ລົດດາມ 4 ລໍ້ | 40.000 | 344.000.000 | 27.520.000 | 316.480.000 | 39.560.000 | 4.395.556 | 199.798 | 24.975 |
| 8 | ລົດໂມ້ເບຕົງ | 70.000 | 602.000.000 | 48.160.000 | 553.840.000 | 110.768.000 | 12.307.556 | 559.434 | 69.929 |

| ລຳດັບ | ຊື່ຂອງພາຫະນະ | ລາຄາຊື້ (ໂດລາ ສະຫະລັດ) | ລາຄາຊື້ (ກີບ) | ຫັກຄ່າຊາກ (ກີບ) | ມູນຄ່າຍັງເຫຼືອທີ່ ຈະຫັກຄ່າຫຼູ້ຍຫ້ຽນ (ກີບ) | ຫັກຄ່າຫຼູ້ຍຫ້ຽນເປັນ | | | |
|---|---|---|---|---|---|---|---|---|---|
| | | | | | | ຕໍ່ປີ (ກີບ) | ຕໍ່ເດືອນ (ກີບ) | ຕໍ່ວັນ (ກີບ) | ຕໍ່ຊົ່ວໂມງ (ກີບ) |
| **III** | **ປະເພດເຄື່ອງຈັກ** | | | | | | | | |
| 1 | ຈັກສູບນ້ຳ | 2.200 | 18.920.000 | 1.513.600 | 17.406.400 | 2.175.800 | 241.756 | 10.989 | 1.374 |
| 2 | ຈັກສັ່ນສະເທືອນ | 120 | 1.032.000 | 82.560 | 949.440 | 949.440 | 105.493 | 4.795 | 599 |
| 3 | ຈັກປັບໜ້າເບຕົງ | | 6.500.000 | 520.000 | 5.980.000 | 1.993.333 | 221.481 | 10.067 | 1.258 |
| 4 | ຈັກລົມນ້ອຍ | 2.500 | 21.500.000 | 1.720.000 | 19.780.000 | 6.593.333 | 732.593 | 33.300 | 4.162 |
| 5 | ຈັກໄຟຟ້າ 10 ກິໂລວັດ | 15.000 | 129.000.000 | 10.320.000 | 118.680.000 | 39.560.000 | 4.395.556 | 199.798 | 24.975 |
| 6 | ຈັກໄຟຟ້າ | 5.500 | 47.300.000 | 3.784.000 | 43.516.000 | 5.439.500 | 604.389 | 27.472 | 3.434 |
| 7 | ຈັກຈອດ | 500 | 4.300.000 | 344.000 | 3.956.000 | 494.500 | 54.944 | 2.497 | 312 |
| 8 | ຈັກປະສົມເບຕົງດ້ວຍມື (1 ເປົາຊີມັງ) | 1.000 | 8.600.000 | 688.000 | 7.912.000 | 989.000 | 109.889 | 4.995 | 624 |
| 9 | ຈັກປະສົມເບຕົງດ້ວຍມື (2 ເປົາຊີມັງ) | 1.500 | 12.900.000 | 1.032.000 | 11.868.000 | 1.483.500 | 164.833 | 7.492 | 937 |
| 10 | ຈັກຕົບຊ້າງຕຳດິນ | 688 | 5.915.000 | 473.200 | 5.441.800 | 1.088.360 | 120.929 | 5.497 | 687 |
| 11 | ຈັກສູບນ້ຳຂະໜາດທໍ່ 25ມມ | 248 | 2.128.750 | 170.300 | 1.958.450 | 391.690 | 43.521 | 1.978 | 247 |
| **IV** | **ປະເພດໂຮງງານ** | | | | | | | | |
| 1 | ໂຮງງານປະສົມເບຕົງ | 83.333 | 716.666.667 | 57.333.333 | 659.333.333 | 164.833.333 | 18.314.815 | 832.492 | 104.061 |

**ໝາຍເຫດ:** ຂໍ້ມູນຂ້າງເທິງ ອີງຕາມ ປຶ້ມຄູ່ມື ແນະນາການນຳໃຊ້ ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງ ຂົວ-ທາງ ຂອງ ກົມຂົວທາງ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 30305/ຍທຂ.ກຂທ, ລົງວັນທີ 19 ພະຈິກ 2019.

– ອັດຕາແລກປ່ຽນ: 8.600 ກີບ/ໂດລາສະຫະລັດ.

### 2.5.3 ຄ່າຂົນສົ່ງ

ຫຼັກການຄິດໄລ່ ຄ່າຂົນສົ່ງ ວັດສະດຸກໍ່ສ້າງ ແມ່ນຄິດໄລ່ເປັນໂຕນຕໍ່ກິໂລແມັດ ຫຼື ແມັດກ້ອນຕໍ່ກິໂລແມັດ, ໃນກໍລະນີທີ່ເປັນການຂົນສົ່ງວັດສະດຸກໍ່ສ້າງຢູ່ສະໜາມ ໂດຍການສະເລ່ຍເອົາຄ່າຂົນສົ່ງຂອງລົດຫຼາຍຂະໜາດ ເທົ່າກັບ 1.048 ກີບ/ໂຕນ/ກິໂລແມັດ ໃນລັດສະໝີ 5 ກິໂລແມັດ. ສ່ວນການຂົນສົ່ງວັດສະດຸທາງໄກ ເກີນ 5 ກິໂລແມັດ ຈາກບ່ອນອື່ນມາສະໜາມ ເທົ່າກັບ 732 ກີບ/ໂຕນ/ກິໂລແມັດ.

**ໝາຍເຫດ:** ຂໍ້ມູນຂ້າງເທິງ ອີງຕາມ ປຶ້ມຄູ່ມື ແນະນຳການນຳໃຊ້ ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງ ຂົວ-ທາງ ຂອງ ກົມຂົວທາງ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 30305/ຍທຂ.ກຂທ, ລົງວັນທີ 19 ພະຈິກ 2019.

### 2.5.4 ແຮງງານ

ສຳລັບຄ່າແຮງງານ ແມ່ນອີງໃສ່ແຈ້ງການຂອງຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 560/ຫສນຍ.ກລຂ, ລົງວັນທີ 20 ເມສາ 2018, ວ່າດ້ວຍທິດຊີ້ນຳກ່ຽວກັບການພິຈາລະນາຮັບຮອງເອົາ ການປັບຂຶ້ນຄ່າແຮງງານຂັ້ນຕ່ຳສຸດ ຂອງຜູ້ອອກແຮງງານ ຢູ່ໃນ ສປປ ລາວ ທີ່ເຮັດວຽກໃນຂົງເຂດທຸລະກິດ, ຜູ້ອອກແຮງງານບໍ່ມີສີມືຕ້ອງໄດ້ຮັບເປັນເງິນເດືອນພື້ນຖານ ຕ່ຳສຸດ 1.100.000 ກີບ/ເດືອນ ເປັນແຕ່ລະເດືອນຕາມກຳນົດເວລາການເຮັດວຽກປົກກະຕິ 22 ມື້/ເດືອນ ແລະ 8 ຊົ່ວໂມງ/ມື້.

ສ່ວນການຈັດລຳດັບຂັ້ນຂອງກຳມະກອນທີ່ມີສີມື, ຊຳນານງານ, ການກຳນົດຊັ້ນ, ຂັ້ນ ແມ່ນອີງໃສ່ລະບຽບການແບ່ງຊັ້ນ, ຂັ້ນ ແລະ ຄ່າດັດສະນີ ທີ່ທາງກະຊວງພາຍໃນ ກຳນົດໄວ້, ນອກຈາກນັ້ນ ຍັງໄດ້ອີງໃສ່ຄ່າແຮງງານຕາມແຕ່ລະທ້ອງຖິ່ນ ແລະ ລະດູການອີກດ້ວຍ. ສຳລັບຂໍ້ມູນກ່ຽວກັບຄ່າແຮງງານ ແລະ ເງິນເດືອນ ແມ່ນໄດ້ລະບຸໄວ້ໃນຕາຕະລາງລຸ່ມນີ້:

**ຕາຕະລາງ 3:** ຂໍ້ມູນກ່ຽວກັບຄ່າແຮງງານ ແລະ ເງິນເດືອນ.

| ລຳດັບ | ຕຳແໜ່ງງານ | ປະເພດ | ເງິນເດືອນ (ກີບ) | ອື່ນໆ (ກີບ) | ລວມ (ກີບ) | ຄິດໄລ່ເປັນ | |
|---|---|---|---|---|---|---|---|
| | | | | | | ກີບ/ວັນ | ກີບ/ຊົ່ວໂມງ |
| **I** | **ສາຍປະຕິບັດພາກສະໜາມ** | | | | | | |
| 1 | ວິຊາການຄຸມງານກໍ່ສ້າງໂຮງງານ | ຊຳນານງານ | 3.500.000 | 862.500 | 4.362.500 | 198.295 | 24.787 |
| | | ທົ່ວໄປ | 3.000.000 | 862.500 | 3.862.500 | 175.568 | 21.946 |
| 2 | ວິຊາການຄຸມງານໂຄງສ້າງ | ຊຳນານງານ | 3.800.000 | 862.500 | 4.662.500 | 211.932 | 26.491 |
| | | ທົ່ວໄປ | 3.300.000 | 862.500 | 4.162.500 | 189.205 | 23.651 |
| 3 | ວິຊາການຄຸມໂຮງງານເບຕົງ | ຊຳນານງານ | 3.500.000 | 862.500 | 4.362.500 | 198.295 | 24.787 |
| | | ທົ່ວໄປ | 3.000.000 | 862.500 | 3.862.500 | 175.568 | 21.946 |
| 4 | ວິຊາການວັດແທກ | ຊຳນານງານ | 3.500.000 | 862.500 | 4.362.500 | 198.295 | 24.787 |
| | | ທົ່ວໄປ | 3.000.000 | 862.500 | 3.862.500 | 175.568 | 21.946 |
| 5 | ວິຊາການຫ້ອງທົດລອງ | ຊຳນານງານ | 3.500.000 | 862.500 | 4.362.500 | 198.295 | 24.787 |
| | | ທົ່ວໄປ | 3.000.000 | 862.500 | 3.862.500 | 175.568 | 21.946 |
| 6 | ແຮງງານ | ຊຳນານງານ | 2.400.000 | 862.500 | 3.262.500 | 148.295 | 18.537 |
| | | ທົ່ວໄປ | 2.200.000 | 862.500 | 3.062.500 | 139.205 | 17.401 |
| **II** | **ສາຍການບັນຊາກົນຈັກ** | | | | | | |
| 1 | ບັນຊາລົດດູດ | ຊຳນານງານ | 3.800.000 | 862.500 | 4.662.500 | 211.932 | 26.491 |
| | | ທົ່ວໄປ | 3.000.000 | 862.500 | 3.862.500 | 175.568 | 21.946 |
| 2 | ບັນຊາລົດຈົກຂຸດດິນ | ຊຳນານງານ | 3.500.000 | 862.500 | 4.362.500 | 198.295 | 24.787 |
| | | ທົ່ວໄປ | 3.200.000 | 862.500 | 4.062.500 | 184.659 | 23.082 |

| ລຳດັບ | ຕຳແໜ່ງງານ | ປະເພດ | ເງິນເດືອນ (ກີບ) | ອື່ນໆ (ກີບ) | ລວມ (ກີບ) | ຄິດໄລ່ເປັນ | |
|---|---|---|---|---|---|---|---|
| | | | | | | ກີບ/ວັນ | ກີບ/ຊົ່ວໂມງ |
| 3 | ບັນຊາລົດຈົກຈົກຫີນຢູ່ບໍ່ | ຊຳນານງານ | 3.800.000 | 862.500 | 4.662.500 | 211.932 | 26.491 |
| | | ທົ່ວໄປ | 3.400.000 | 862.500 | 4.262.500 | 193.750 | 24.219 |
| 4 | ບັນຊາລົດຈົກຕີນຢາງ | ຊຳນານງານ | 3.200.000 | 862.500 | 4.062.500 | 184.659 | 23.082 |
| | | ທົ່ວໄປ | 3.000.000 | 862.500 | 3.862.500 | 175.568 | 21.946 |
| 5 | ບັນຊາລົດຕັກ | ຊຳນານງານ | 3.200.000 | 862.500 | 4.062.500 | 184.659 | 23.082 |
| | | ທົ່ວໄປ | 3.000.000 | 862.500 | 3.862.500 | 175.568 | 21.946 |
| 6 | ບັນຊາລົດລາກ | ຊຳນານງານ | 3.400.000 | 862.500 | 4.262.500 | 193.750 | 24.219 |
| | | ທົ່ວໄປ | 3.100.000 | 862.500 | 3.962.500 | 180.114 | 22.514 |
| 7 | ບັນຊາລົດຍົກໃຫຍ່ | ຊຳນານງານ | 3.500.000 | 862.500 | 4.362.500 | 198.295 | 24.787 |
| | | ທົ່ວໄປ | 3.000.000 | 862.500 | 3.862.500 | 175.568 | 21.946 |
| 8 | ຂັບລົດຂົນສົ່ງຕິດເຄື່ອງຍົກ | ຊຳນານງານ | 3.500.000 | 862.500 | 4.362.500 | 198.295 | 24.787 |
| | | ທົ່ວໄປ | 3.000.000 | 862.500 | 3.862.500 | 175.568 | 21.946 |
| 9 | ຂັບລົດດາມ 4-6 ລໍ້ | ຊຳນານງານ | 3.200.000 | 862.500 | 4.062.500 | 184.659 | 23.082 |
| | | ທົ່ວໄປ | 2.900.000 | 862.500 | 3.762.500 | 171.023 | 21.378 |
| 10 | ຂັບລົດດາມ 10 ລໍ້ | ຊຳນານງານ | 3.500.000 | 862.500 | 4.362.500 | 198.295 | 24.787 |
| | | ທົ່ວໄປ | 3.200.000 | 862.500 | 4.062.500 | 184.659 | 23.082 |
| 11 | ຂັບລົດດາມ 12 ລໍ້ | ຊຳນານງານ | 3.800.000 | 862.500 | 4.662.500 | 211.932 | 26.491 |
| | | ທົ່ວໄປ | 3.500.000 | 862.500 | 4.362.500 | 198.295 | 24.787 |
| 12 | ຂັບລົດດາມ 16 ລໍ້ | ຊຳນານງານ | 3.800.000 | 862.500 | 4.662.500 | 211.932 | 26.491 |
| | | ທົ່ວໄປ | 3.500.000 | 862.500 | 4.362.500 | 198.295 | 24.787 |
| 13 | ຂັບລົດນໍ້າ | ຊຳນານງານ | 3.000.000 | 862.500 | 3.862.500 | 175.568 | 21.946 |
| | | ທົ່ວໄປ | 2.800.000 | 862.500 | 3.662.500 | 166.477 | 20.810 |
| 14 | ຂັບລົດນໍ້າມັນ | ຊຳນານງານ | 3.000.000 | 862.500 | 3.862.500 | 175.568 | 21.946 |
| | | ທົ່ວໄປ | 2.800.000 | 862.500 | 3.662.500 | 166.477 | 20.810 |
| 15 | ຊ່າງໄຟຟ້າ | ຊຳນານງານ | 3.500.000 | 862.500 | 4.362.500 | 198.295 | 24.787 |
| | | ທົ່ວໄປ | 3.000.000 | 862.500 | 3.862.500 | 175.568 | 21.946 |
| 16 | ຂັບລົດເບົາ | ຊຳນານງານ | 3.000.000 | 862.500 | 3.862.500 | 175.568 | 21.946 |
| | | ທົ່ວໄປ | 2.800.000 | 862.500 | 3.662.500 | 166.477 | 20.810 |
| 17 | ພະນັກງານຊ່ວຍບໍລິຫານ | ຊຳນານງານ | 2.800.000 | 862.500 | 3.662.500 | 166.477 | 20.810 |
| | | ທົ່ວໄປ | 2.500.000 | 862.500 | 3.362.500 | 152.841 | 19.105 |
| 18 | ພະນັກງານຊ່ວຍພາກວິຊາການ | ຊຳນານງານ | 2.800.000 | 862.500 | 3.662.500 | 166.477 | 20.810 |
| | | ທົ່ວໄປ | 2.500.000 | 862.500 | 3.362.500 | 152.841 | 19.105 |
| 19 | ແຮງງານ | ຊຳນານງານ | 2.400.000 | 862.500 | 3.262.500 | 148.295 | 18.537 |
| | | ທົ່ວໄປ | 2.200.000 | 862.500 | 3.062.500 | 139.205 | 17.401 |
| 20 | ບັນຊາລົດສີດເບຕົງ | ຊຳນານງານ | 3.500.000 | 862.500 | 4.362.500 | 198.295 | 24.787 |
| | | ທົ່ວໄປ | 3.200.000 | 862.500 | 4.062.500 | 184.659 | 23.082 |

**ໝາຍເຫດ:** ຂໍ້ມູນຂ້າງເທິງ ອີງຕາມ ປຶ້ມຄູ່ມື ແນະນຳການນຳໃຊ້ ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງ ຂົວ-ທາງ ຂອງ ກົມຂົວທາງ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 30305/ຍທຂ.ກຂທ, ລົງວັນທີ 19 ພະຈິກ 2019.

# 3. ການນຳໃຊ້ລາຄາຫົວໜ່ວຍ ແລະ ວິທີການນຳໃຊ້ສູດຄິດໄລ່

## 3.1 ການນຳໃຊ້ລາຄາຫົວໜ່ວຍ

ການນຳໃຊ້ລາຄາຫົວໜ່ວຍ ວຽກງານ ກໍ່ສ້າງ ແລະ ປັບປຸງ ລະບົບນໍ້າປະປາ ສະບັບປີ 2021 (ລາຄາ 3 ພາກ) ແມ່ນເປັນລາຄາເພື່ອປຽບທຽບໃນການຂຶ້ນແຜນເທົ່ານັ້ນ ແລະ ເປັນລາຄາທີ່ຈະຕ້ອງຈ່າຍເງິນ ເມື່ອສຳເລັດການກໍ່ສ້າງ ໂຄງການ ພາຍໃນ 2 ເດືອນ ຫາ 1 ປີ, ຖ້າວ່າການຈ່າຍເງິນຫາກຊັກຊ້າເກີນ 1 ປີ ຫຼື ເກີນ 365 ວັນຂຶ້ນໄປ ແມ່ນຈະຕ້ອງໄດ້ຄິດໄລ່ຄ່າອັດຕາດອກເບ້ຍ 3,5% ຕໍ່ປີ (ດອກເບ້ຍທະນາຄານກາງ, ບໍ່ແມ່ນດອກເບ້ຍຕາມອັດຕາເງິນກູ້ຢືມຂອງທະນາຄານທຸລະກິດ).

ສຳລັບລາຄາຫົວໜ່ວຍ ທີ່ຈະຕ້ອງນຳໃຊ້ເຂົ້າໃນການຄິດໄລ່ມູນຄ່າຂອງໂຄງການ ຈະຕ້ອງໄດ້ມີການຄິດໄລ່ຄືນ ເພື່ອໃຫ້ໄດ້ມູນຄ່າຂອງໂຄງການທີ່ໃກ້ຄຽງກັບສະພາບຕົວຈິງ, ເຊິ່ງເຈົ້າຂອງໂຄງການຈະຕ້ອງໄດ້ເກັບກຳຂໍ້ມູນຕົວຈິງ ຢູ່ແຂວງ ຫຼື ພື້ນທີ່ ທີ່ໂຄງການຕັ້ງຢູ່ ມາປ້ອນເຂົ້າສູດທີ່ໄດ້ກຳນົດໄວ້ ແລ້ວຈຶ່ງຄິດໄລ່ອອກມາເປັນລາຄາຫົວໜ່ວຍຂອງໂຄງການນັ້ນ (ບໍ່ໝາຍຄວາມວ່າຈະເອົາລາຄາຫົວໜ່ວຍ 3 ພາກ ທີ່ມີມາໃສ່ເປັນມູນຄ່າຂອງໂຄງການເລີຍ).

## 3.2 ວິທີການນຳໃຊ້ສູດຄິດໄລ່

ໂຄງສ້າງສູດຄິດໄລ່ລາຄາຫົວໜ່ວຍນີ້ ແມ່ນໄດ້ສ້າງຂຶ້ນມາເພື່ອເປັນເຄື່ອງມືໃນການຄິດໄລ່ ຫາລາຄາຂອງກິດຈະການກໍ່ສ້າງໃດໜຶ່ງ ເຊິ່ງໄດ້ກຳນົດໂຄງສ້າງໃຫ້ມີການເຊື່ອມຕໍ່ເຂົ້າຫາກັນ ໂດຍຈະສ້າງເປັນຖານຂໍ້ມູນ ໃນນັ້ນລວມມີ: ໂຄງສ້າງສູດຄິດໄລ່ ຂອງແຕ່ລະລາຍການໜ້າວຽກ, ສະມັດຖະພາບການເຮັດວຽກຂອງ ກົນຈັກ, ເຄື່ອງຈັກ ແລະ ແຮງງານ, ຂໍ້ມູນກຳນົດອັດຕາການສິ້ນເປືອງລວມທັງມູນຄ່າຂອງກົນຈັກ, ຂໍ້ມູນການຂົນສົ່ງວັດສະດຸກໍ່ສ້າງ, ລາຄາວັດສະດຸກໍ່ສ້າງ, ຂໍ້ກຳນົດກ່ຽວກັບຄ່າບໍລິຫານ ຄ່າດຳເນີນການ ລວມທັງຄ່າອາກອນຕ່າງໆ ທີ່ກ່ຽວຂ້ອງ (ເຊິ່ງທັງໝົດຈະສັງລວມເຂົ້າມາເປັນສູນລວມຖານຂໍ້ມູນອັນດຽວ, ແຕ່ລະລາຍການຈະມີຄວາມໝາຍຕໍ່ໝົດທຸກອົງປະກອບຂອງໂຄງສ້າງ (ໝາຍຄວາມວ່າ ຖ້າຂໍ້ມູນຕົວໃດຕົວໜຶ່ງຫາກບໍ່ເຊື່ອມຕໍ່ ຫຼື ຖືກລຶບໄປ ຈະເຮັດໃຫ້ລະບົບຂອງໂຄງສ້າງລາຄາຫົວໜ່ວຍບໍ່ເຮັດວຽກ ຫຼື ບໍ່ຊັດເຈນ). ສຳລັບຂັ້ນຕອນການນຳໃຊ້ ມີດັ່ງນີ້:

### 3.2.1 ການເກັບກຳຂໍ້ມູນ

ສຳລັບການເກັບກຳຂໍ້ມູນ ແມ່ນໃຫ້ກຳນົດເອົາມື້ເລີ່ມຕົ້ນຂຶ້ນແຜນໂດຍການລະບຸ ວັນເດືອນປີ, ຈຸດທີ່ຕັ້ງ ແລະ ຂອບເຂດໂຄງການ ໂດຍເກັບກຳເອົາບັນດາປັດໄຈຫຼັກ ເຊັ່ນ: ອັດຕາແລກປ່ຽນເງິນຕາຕ່າງປະເທດ, ຄ່າຂົນສົ່ງ, ລາຄາວັດສະດຸກໍ່ສ້າງທີ່ເປັນຫຼັກ (ດິນ, ຫີນ, ຊາຍ, ຊີມັງ, ເຫຼັກເສັ້ນ, ທໍ່ນໍ້າ ແລະ ອຸປະກອນ, ລາຄາພາຫະນະກົນຈັກ, ລາຄາເຄື່ອງຈັກ, ຄ່າແຮງງານ ແລະ ອື່ນໆ) ຕາມຕາຕະລາງທີ່ຕິດຄັດມາ ເພື່ອເປັນຂໍ້ມູນໃນການຄິດໄລ່ຫາຄ່າຕ່າງໆຂອງແຕ່ລະລາຍການໜ້າວຽກ (ຖ້າມີຂໍ້ມູນຊັດເຈນເທົ່າໃດ ຜົນຂອງການຄິດໄລ່ລາຄາຫົວໜ່ວຍຊັດເຈນເທົ່ານັ້ນ).

ນອກຈາກບັນດາລາຍການວັດສະດຸກໍ່ສ້າງ ທີ່ລະບຸຕາມຕາຕະລາງໂຄງປະກອບລາຄາຫົວໜ່ວຍ ຖ້າຫາກມີບາງລາຍທີ່ກ່ຽວຂ້ອງກັບໜ້າວຽກເພີ່ມເຕີມ ແມ່ນສາມາດບັນຈຸເຂົ້າຕື່ມຕາມຄວາມຕ້ອງການຕົວຈິງ. ສະນັ້ນ, ການນຳໃຊ້ສູດຄິດໄລ່ດັ່ງກ່າວ ຈະຕ້ອງແມ່ນຜູ້ທີ່ມີຄວາມຮູ້ພື້ນຖານ ຫຼື ຜ່ານການຝຶກອົບຮົມວິທີການນຳໃຊ້ ແລະ ທຳຄວາມເຂົ້າໃຈໃນການນຳໃຊ້ໃຫ້ຊັດເຈນພໍສົມຄວນ ຈຶ່ງສາມາດດຳເນີນການຄິດໄລ່ ຢ່າງຖືກຕ້ອງ ແລະ ຊັດເຈນໄດ້.

ການປ້ອນລາຄາວັດສະດຸກໍ່ສ້າງຕໍ່ໄປນີ້ ເປັນກໍລະນີຕົວຢ່າງຂອງ ນະຄອນຫຼວງວຽງຈັນ (ໃຫ້ເຂົ້າໄປທີ່ Material Price Input ໃນໄຟລ໌ EXCEL) ຕາຕະລາງ ປ້ອນຂໍ້ມູນລາຄາວັດສະດຸ ມີດັ່ງນີ້:

**ຕາຕະລາງ 4:** ຕົວຢ່າງລາຄາວັດສະດຸກໍ່ສ້າງ

| ລໍາດັບ | ລາຍການ | ຫົວໜ່ວຍ | ບໍລິມາດ | ລາຄາ (ກີບ) |
|---|---|---|---|---|
| 1 | **ນໍ້າມັນແອັດຊັງ** | ລິດ | 1 | 9.100 |
| 2 | **ນໍ້າມັນກາຊວນ** | ລິດ | 1 | 8.300 |
| 3 | **ຄ່າໄຟຟ້າ** | ກິໂລວັດໂມງ | 1 | 710 |
| 4 | **ນໍ້າ** | | | |
| | ນໍ້າເຖິງສະໜາມ | ແມັດກ້ອນ | 1 | 10.000 |
| 5 | **ຊາຍ:** | | | |
| | ຊາຍ (ຖົມ) | ແມັດກ້ອນ | 1 | 20.000 |
| | ຊາຍ (ກໍ່,ໂບກ,ປະສົມເບຕົງ) | ແມັດກ້ອນ | 1 | 40.000 |
| 6 | **ຫີນຫາດ (ຈາກແມ່ນໍ້າ)** | | | |
| | ຂະໜາດ 5-30ມມ | ແມັດກ້ອນ | 1 | 100.000 |
| | ຂະໜາດ > 30ມມ | ແມັດກ້ອນ | 1 | 150.000 |
| 7 | **ຫີນຫາດຂົບ (ຈາກແມ່ນໍ້າ)** | | | |
| | ຂະໜາດ 0-5ມມ | ແມັດກ້ອນ | 1 | 150.000 |
| | ຂະໜາດ 5-12ມມ | ແມັດກ້ອນ | 1 | 150.000 |
| | ຂະໜາດ 12-16ມມ | ແມັດກ້ອນ | 1 | 150.000 |
| | ຂະໜາດ 5-25ມມ | ແມັດກ້ອນ | 1 | 150.000 |
| | ຂະໜາດ 0-40ມມ | ແມັດກ້ອນ | 1 | 150.000 |
| 8 | **ຫີນຂົບຈາກພູ/ບໍ່ຫີນ** | | | |
| | ຂະໜາດ 0-2ມມ | ແມັດກ້ອນ | 1 | 150.000 |
| | ຂະໜາດ 0-5ມມ | ແມັດກ້ອນ | 1 | 150.000 |
| | ຂະໜາດ 5-12ມມ | ແມັດກ້ອນ | 1 | 150.000 |
| | ຂະໜາດ 12-16ມມ | ແມັດກ້ອນ | 1 | 150.000 |
| | ຂະໜາດ 5-25ມມ | ແມັດກ້ອນ | 1 | 150.000 |
| | ຂະໜາດ 0-40ມມ | ແມັດກ້ອນ | 1 | 150.000 |
| 9 | **ຫີນພູໃຫຍ່** | | | |
| | ຂະໜາດ 120-250ມມ | ແມັດກ້ອນ | 1 | 150.000 |
| | ຂະໜາດ 250-350ມມ | ແມັດກ້ອນ | 1 | 150.000 |
| | ຂະໜາດ >350ມມ | ແມັດກ້ອນ | 1 | 150.000 |
| 10 | **ດິນ** | | | |
| | ດິນດໍາ, ດິນແດງ ແລະ ດິນໜາກຄອມ | ແມັດກ້ອນ | 1 | 40.000 |
| 11 | **ວັດຖຸ** | | | |
| | ລະເບີດຫີນ | ກິໂລກຼາມ | 1 | 100.000 |
| | ຊ້ວນ | ດວງ | 1 | 30.000 |
| | ພ້າ | ດວງ | 1 | 50.000 |
| | ຈົກ | ດວງ | 1 | 30.000 |
| | ຖົງ | ໜ່ວຍ | 1 | 5.000 |
| | ເຊືອກສໍາລັບມັດດຶງຖົງບໍາສິ່ງດິນ | ແມັດ | 1 | 1.500 |
| | ທາງຢາງ ປູກ້ອນເບຕົງສີ | ກີບ/ແມັດກ້ອນ | 1 | 1.598.100 |
| | ປູຢາງຊັ້ນຊັ້ນ Wearing Course | ກີບ/ແມັດກ້ອນ | 1 | 1.539.897 |
| | ຜິວໜ້າທາງ RC | ກີບ/ແມັດກ້ອນ | 1 | 1.661.826 |

**ໝາຍເຫດ:** ຂໍ້ມູນຂ້າງເທິງ ເປັນການສະແດງຕົວຢ່າງ ລາຄາທ້ອງຕະຫຼາດໃນ ນະຄອນຫຼວງວຽງຈັນ.

**ຕາຕະລາງ 5:** ຕົວຢ່າງລາຄາວັດສະດຸກໍ່ສ້າງ ສຳລັບວຽກເບຕົງເສີມເຫຼັກ ແລະ ລາຍການອື່ນໆ

| ລຳດັບ | ລາຍການ | | ລາຄາ | ຫົວໜ່ວຍ |
|---|---|---|---|---|
| 1 | ຫີນແຮ່ | ລວມ | 100.000 | ກີບ/ແມັດກ້ອນ |
| | | ຂົນສົ່ງ | 0 | ກີບ/ແມັດກ້ອນ |
| | | ຊື້ຫີນແຮ່ | 100.000 | ກີບ/ແມັດກ້ອນ |
| 2 | ຊາຍ | ລວມ | 40.000 | ກີບ/ແມັດກ້ອນ |
| | | ຂົນສົ່ງ | 0 | ກີບ/ແມັດກ້ອນ |
| | | ລາຄາ | 40.000 | ກີບ/ແມັດກ້ອນ |
| 3 | ຊີມັງປອກແລນ | ລວມ | 700.000 | ກີບ/ໂຕນ |
| | | ຂົນສົ່ງ | 0 | ກີບ/ໂຕນ |
| | | ລາຄາ | 700.000 | ກີບ/ໂຕນ |
| 4 | ນ້ຳສະອາດ | ລວມ | 0,05 | ກີບ/ລິດ |
| | | ຂົນສົ່ງ | 0 | ກີບ/ລິດ |
| | | ລາຄາ | 0,05 | ກີບ/ລິດ |
| 5 | ແບບໄມ້ | ລວມ | 2.200.000 | ກີບ/ແມັດກ້ອນ |
| | | ຂົນສົ່ງ | 0 | ກີບ/ແມັດກ້ອນ |
| | | ລາຄາ | 2.200.000 | ກີບ/ແມັດກ້ອນ |
| 6 | ແບບເຫຼັກ | ລວມ | 117.750 | ກີບ/ຕາແມັດ |
| | | ຂົນສົ່ງ | 0 | ກີບ/ຕາແມັດ |
| | | ລາຄາ | 117750 | ກີບ/ຕາແມັດ |
| 7 | ໄມ້ຄ້ຳ-ຍຶດ ໄມ້ປະສົມ | ລວມ | 2.200.000 | ກີບ/ແມັດກ້ອນ |
| | | ຂົນສົ່ງ | 0 | ກີບ/ແມັດກ້ອນ |
| | | ລາຄາ | 2.200.000 | ກີບ/ແມັດກ້ອນ |
| 8 | ໄມ້ກົມຄ້ຳ | ລາຄາ | 4.000 | ກີບ/ໂຕ |
| 9 | ເຫຼັກສຳລັບຄ້ຳ | ລວມ | 17.378 | ກີບ/ແມັດ |
| | | ຂົນສົ່ງ | 0 | ກີບ/ແມັດ |
| | | ລາຄາ | 17.378 | ກີບ/ແມັດ |
| 10 | ເຫຼັກຂໍ້ອ້ອຍ DB SD40 | ລວມ | 5.100.000 | ກີບ/ໂຕນ |
| | | ຂົນສົ່ງ | 0 | ກີບ/ໂຕນ |
| | | ລາຄາ | 5.100.000 | ກີບ/ໂຕນ |
| 11 | ເຫຼັກກົມ RB SD24 | ລວມ | 5.500.000 | ກີບ/ໂຕນ |
| | | ຂົນສົ່ງ | 0 | ກີບ/ໂຕນ |
| | | ລາຄາ | 5.500.000 | ກີບ/ໂຕນ |
| 12 | ຕະປູຕອກເບຕົງ | ລາຄາ | 50.000 | ກີບ/ກິໂລກຼາມ |
| 13 | ຕະປູຕອກໄມ້ | ລາຄາ | 15.000 | ກີບ/ກິໂລກຼາມ |
| 14 | ລວດ | ລາຄາ | 15.000 | ກີບ/ກິໂລກຼາມ |
| 15 | ກໍ້ແຜ່ນຢາງ | ລາຄາ | 40.000 | ກີບ/100ຕາແມັດ |
| 16 | ທູບຈອດເຫຼັກ | ລາຄາ | 30.000 | ກີບ/ກິໂລກຼາມ |
| 17 | ເຫຼັກເຄືອບ | ລວມ | 10.000 | ກີບ/ກິໂລກຼາມ |
| | | ຂົນສົ່ງ | 0 | ກີບ/ກິໂລກຼາມ |
| | | ລາຄາ | 10.000 | ກີບ/ກິໂລກຼາມ |
| 18 | ສີກັນໜ້ຽງສຳເລັດຮູບ | ລາຄາ | 50.000 | ກີບ/ລິດ |
| 19 | ຟອຍທາສີກັນໜ້ຽງ | ລາຄາ | 5.000 | ກີບ/ອັນ |

**ໝາຍເຫດ:** ຂໍ້ມູນຂ້າງເທິງ ເປັນການສະແດງຕົວຢ່າງ ລາຄາທ້ອງຕະຫຼາດໃນ ນະຄອນຫຼວງວຽງຈັນ.

### 3.2.2 ລາຍການປະກອບ ໃບຄິດໄລ່ລາຄາ ໃນໄຟລ໌ເອເລັກໂຕຼນິກ Excel

**1) ໃບຄິດໄລ່ລາຄາທີ 1 (Bill 1) : ລາຍຈ່າຍທົ່ວໄປຂອງໂຄງການ**

ໜ້າວຽກລາຍຈ່າຍທົ່ວໄປຂອງໂຄງການ, ກະກຽມໂຄງການ, ກະກຽມສະໜາມກໍ່ສ້າງ, ເງິນຄໍ້າປະກັນໃນການກໍ່ສ້າງ ການເບີກຈ່າຍແມ່ນຕາມລາຍການໜ້າວຽກ, ສ່ວນຫຼາຍຈະຈ່າຍເປັນແບບມອບເໝົາ (Lump sum) ຫຼື ຈ່າຍຕາມບໍລິມາດຕົວຈິງ (Provisional sum). ສະນັ້ນ, ການນໍາໃຊ້ລາຄາຫົວໜ່ວຍໃນການກໍ່ສ້າງ ແມ່ນປະເມີນຕາມກໍາລັງການຜະລິດຂອງໂຮງງານ.

**2) ໃບຄິດໄລ່ລາຄາທີ 2 (Bill 2): ໜ້າວຽກຈັດຊື້ທໍ່ສົ່ງ, ທໍ່ແຈກ ພ້ອມດ້ວຍອຸປະກອນ**

ລາຍການ ທໍ່ສົ່ງ ແລະ ທໍ່ແຈກ ພ້ອມດ້ວຍອຸປະກອນ ສ່ວນໃຫຍ່ປະກອບມີ ທໍ່ຢາງດໍາ (HDPE), ທໍ່ຢູພີວີຊີ (uPVC), ທໍ່ພີວີຊີ (PVC), ທໍ່ເຫຼັກເຄືອບສັງກະສີ (GSP) ແລະ ທໍ່ຂາງ (DIP) ລາຄາຫົວໜ່ວຍດັ່ງກ່າວ ບໍ່ໄດ້ລວມຄ່າຂົນສົ່ງ.

**3) ໃບຄິດໄລ່ລາຄາທີ 3 (Bill 3): ລາຄາແຮງງານວາງທໍ່ສົ່ງ, ທໍ່ແຈກ ແລະ ຕິດຕັ້ງອຸປະກອນ**

ບໍລິມາດ ຂຸດ-ຖົມດິນ, ໝອນຍຶດທໍ່ ແລະ ຂຸມກວດກາ ແມ່ນອີງຕາມມາດຕະຖານການວາງທໍ່-ໝອນຍຶດທໍ່ ແລະ ຂະໜາດຂຸມກວດກາຕົວຈິງ ແລະ ລາຄາດັ່ງກ່າວໄດ້ລວມເອົາລາຄາ ທາງກົງ ແລະ ທາງອ້ອມ (ຍົກເວັ້ນລາຄາ ທໍ່ ແລະ ອຸປະກອນຂໍ້ຕໍ່ ຂອງໃບຄິດໄລ່ລາຄາທີ 2).

**4) ໃບຄິດໄລ່ລາຄາທີ 4 (Bill 4): ລາຄາກໍ່ສ້າງຫົວງານສົ່ງນໍ້າດິບ**

ການກໍ່ສ້າງຫົວງານ ບໍລິມາດວຽກແມ່ນຄິດໄລ່ຕາມ ໂຄງສ້າງຫົວງານຕົວຈິງ ເປັນຕົ້ນ ເບຕົງ ແລະ ເຫຼັກ ໂຄງສ້າງ. ສໍາລັບ ທໍ່, ອຸປະກອນຂໍ້ຕໍ່, ກົນຈັກ ແລະ ໄຟຟ້າ ແມ່ນນໍາໃຊ້ໂຄງສ້າງລາຄາ ໃບຄິດໄລ່ລາຄາທີ 2, 3, 6 ແລະ 7 ຕາມລໍາດັບ.

**5) ໃບຄິດໄລ່ລາຄາທີ 5 (Bill 5): ລາຄາກໍ່ສ້າງໂຮງງານຜະລິດນໍ້າປະປາ ແລະ ອ່າງເກັບນໍ້າ**

ການກໍ່ສ້າງໂຮງງານຜະລິດນໍ້າປະປາ, ອ່າງເກັບນໍ້າ ແລະ ຮ່ອງລະບາຍນໍ້າ ແມ່ນຄິດໄລ່ບໍລິມາດວຽກຕົ້ນຕໍຂອງໂຄງສ້າງດັ່ງກ່າວ ເປັນຕົ້ນ ບໍລິມາດເບຕົງເສີມເຫຼັກ. ສໍາລັບ ທໍ່, ອຸປະກອນຂໍ້ຕໍ່, ກົນຈັກ ແລະ ໄຟຟ້າ ແມ່ນນໍາໃຊ້ໂຄງສ້າງລາຄາ ໃບຄິດໄລ່ລາຄາທີ 2, 3, 6 ແລະ 7 ຕາມລໍາດັບ.

ນອກຈາກນັ້ນ ໂຄງສ້າງລາຄາຫົວໜ່ວຍວຽກນີ້ ໄດ້ພິຈາລະນາເອົາວິທີການກໍ່ສ້າງດ້ວຍ ການໃຊ້ແບບເຫຼັກ ຫຼື ໄມ້ ແລະ ນໍາໃຊ້ເບຕົງປະສົມເອງ ຫຼື ສໍາເລັດຮູບຈາກໂຮງງານ.

**6) ໃບຄິດໄລ່ລາຄາທີ 6 (Bill 6): ລາຄາອຸປະກອນ ແລະ ຕິດຕັ້ງເຄື່ອງກົນຈັກ**

ລາຄາຫົວໜ່ວຍ ອຸປະກອນ ແລະ ຕິດຕັ້ງເຄື່ອງກົນຈັກ ໄດ້ຈາກລາຄາໂຄງການທີ່ຈັດຕັ້ງປະຕິບັດຜ່ານມາປະກອບມີ:

1. ລາຄາຫົວໜ່ວຍ ເຄື່ອງຍົກນໍ້າໜັກ ພ້ອມຄານເຫຼັກ;
2. ລາຄາຫົວໜ່ວຍ ເຄື່ອງວັດແທກອັດຕາການໄຫຼ ແບບເອເລັກໂຕຼນິກ;
3. ລາຄາຫົວໜ່ວຍ ປະຕູນໍ້າປ້ອງກັນນໍ້າກະແທກ (Surge Anticipation Valve);
4. ລາຄາຫົວໜ່ວຍ ທໍ່ສໍາລັບປະສົມໄວ (ປະສົມເຄມີ) (Static Mixers);
5. ລາຄາຫົວໜ່ວຍ ຈັກສູບນໍ້າແບບຈຸ່ມ (Sewerage Pump – SP);
6. ລາຄາຫົວໜ່ວຍ ຈັກສູບນໍ້າແບບແກນຕັ້ງ (Multistage Vertical Pump – CR);
7. ລາຄາຫົວໜ່ວຍ ຈັກສູບນໍ້າແບບຫອຍໂຂ່ງ (End Suction Pump – ES);

8. ລາຄາຫົວໜ່ວຍ ຈັກສູບນໍ້າແບບແກນນອນ (Split Casing Horizontal Delivery pump – HS);
9. ລາຄາຫົວໜ່ວຍ ເຄື່ອງຈັກເປົ່າລົມ (Air Blower).

**7) ໃບຄິດໄລ່ລາຄາທີ 7 (Bill 7): ສະໜອງອຸປະກອນ ແລະ ຕິດຕັ້ງ ໄຟຟ້າ ແລະ ເຄື່ອງຄວບຄຸມ**

ສຳລັບໂຄງສ້າງລາຄາ ແລະ ລາຄາຫົວໜ່ວຍ ສາມາດເລືອກໃຊ້ຂະໜາດຂອງເຄື່ອງຄວບຄຸມ 4 ຮູບແບບຄື:

1. ຕູ້ຄວບຄຸມ ໂດຍກົງ (Direct on Line (DOL) Control);
2. ຕູ້ຄວບຄຸມ ແບບດາວ-ສາມແຈ (Delta – Star Control);
3. ຕູ້ຄວບຄຸມ ແບບຫຼຸດກະແສໄຟເວລາເລີ່ມແລ່ນຈັກ (Soft Starter Control);
4. ຕູ້ຄວບຄຸມ ແບບຄວາມຖີ່ປ່ຽນແປງ (Variable Frequency Drive (VFD) Control).

**8) ໃບຄິດໄລ່ລາຄາທີ 8 (Bill 8): ລາຄາອຸປະກອນເຄື່ອງທົດລອງ**

ລາຄາເຄື່ອງທົດລອງ ແມ່ນໃຫ້ນຳໃຊ້ລາຄາຈັດຊື້ຕົວຈິງ ຕາມຍີ່ຫໍ້ ແລະ ຄຸນນະພາບ (ສຳລັບລາຄາທີ່ໃຊ້ທົ່ວໄປ ແມ່ນຢູ່ໃນເອກະສານເຫຼັ້ມທີ 2).

**9) ໃບຄິດໄລ່ລາຄາທີ 9 (Bill 9): ກໍ່ສ້າງຫ້ອງການ ແລະ ສາງ**

ນຳໃຊ້ລາຄາຫົວໜ່ວຍ ກໍ່ສ້າງເຄຫາສະຖານ ທີ່ໄດ້ຮັບຮອງ ແລະ ປະກາດໃຊ້ຢ່າງເປັນທາງການ.

**10) ໃບຄິດໄລ່ລາຄາທີ 10 (Bill 10): ຕິດຕັ້ງນໍ້າເຂົ້າເຮືອນ**

ລາຄາໝໍ້ແທກນໍ້າ ໄດ້ລວມເອົາຂາ ແລະ ບ້ວງຢາງກັນຊຶມ. ສຳລັບ ທໍ່-ອຸປະກອນທໍ່ ແລະ ແຮງງານ ແມ່ນນຳໃຊ້ລາຄາ ໃນໃບຄິດໄລ່ລາຄາທີ 2 ແລະ 3 ຕາມລຳດັບ.

### 3.2.3 ການນຳໃຊ້ຄຳສັ່ງໃນແຜງເມນູ

ສຳລັບແຜງເມນູ ເປັນແຜງຄວບຄຸມຂໍ້ມູນຂອງໂຄງສ້າງສູດຄິດໄລ່ລາຄາຫົວໜ່ວຍ ເຊິ່ງຂໍ້ມູນທັງໝົດຈະເຊື່ອມຕໍ່ໃສ່ກັນແຕ່ໜ້າທຳອິດການເກັບກຳຂໍ້ມູນ ຈົນເຖິງໜ້າສຸດທ້າຍທີ່ກ່ຽວຂ້ອງ ຖ້າຫາກວ່າ ຂໍ້ມູນໃດໜຶ່ງຫາກຖືກລຶບ ຈະເຮັດໃຫ້ບໍ່ສາມາດຄິດໄລ່ອອກມາເປັນຕົວເລກໄດ້ (ສຳລັບວິທີແກ້ໄຂ ກໍ່ຕ້ອງໄດ້ນຳຄືນຫາຈຸດທີ່ຖືກລຶບ ຫຼື ການປ້ອນຂໍ້ມູນບໍ່ຖືກ). ຕົວຢ່າງ: ການເຂົ້າຫາໂປຼແກຼມ ຈະເລີ່ມຈາກການເກັບກຳຂໍ້ມູນ ແລະ ເຂົ້າຫາແຜງເມນູ ເຮົາຈະໄດ້ຂໍ້ມູນລາຄາຫົວໜ່ວຍກ່ຽວກັບໂຄງການນັ້ນ.

ການເຂົ້າຫາລາຍການໜ້າວຽກ ຕາມໃບຄິດໄລ່ລາຄາໃນໄຟລ໌ເອເລັກໂຕຼນິກ Excel ຊື່ວ່າ: Bill 2 ແລະ 10, 3, 4 ແລະ 5, 6 ແລະ 7; ສຳລັບ Bill 1 ແລະ 8 ມີຕາຕະລາງລາຄາຫົວໜ່ວຍ ບໍ່ໄດ້ນຳໃຊ້ແຜງເມນູ ແລະ Bill 9 ແມ່ນນຳໃຊ້ລາຄາຫົວໜ່ວຍ ກໍ່ສ້າງເຄຫາສະຖານ. ສຳລັບໂປຼແກຼມ ໂຄງສ້າງລາຄາ ສາມາດເຂົ້າເຖິງດັ່ງສະແດງໃນແຜງເມນູລຸ່ມນີ້:

1) ໃບຄິດໄລ່ລາຄາທີ 2 (Bill 2): ໜ້າວຽກຈັດຊື້ທໍ່ສົ່ງ, ທໍ່ແຈກ ພ້ອມດ້ວຍອຸປະກອນ ແລະ ໃບຄິດໄລ່ລາຄາທີ 10 (Bill 10): ຕິດຕັ້ງນໍ້າເຂົ້າເຮືອນ ແມ່ນນຳໃຊ້ ໄຟລ໌ເອເລັກໂຕຼນິກ Excel ຊື່ວ່າ “Bill 2 ແລະ 10” ເຊິ່ງມີແຜງເມນູ ດັ່ງສະແດງໃນຮູບລຸ່ມນີ້:




**ຮູບທີ 1:** ແຜງເມນູ ໂປຼແກຼມຄິດໄລ່ຂອງ Bill 2 ແລະ 10

2) ໃບຄິດໄລ່ລາຄາທີ 3 (Bill 3): ຄ່າແຮງງານວາງທໍ່ສົ່ງ, ທໍ່ແຈກ ແລະ ຕິດຕັ້ງອຸປະກອນ ແມ່ນນຳໃຊ້ ໄຟລ໌ເອເລັກໂຕຼນິກ Excel ຊື່ວ່າ “Bill 3” ເຊິ່ງມີແຜງເມນູ ດັ່ງສະແດງໃນຮູບລຸ່ມນີ້:




**ຮູບທີ 2:** ແຜງເມນູ ໂປຼແກຼມຄິດໄລ່ຂອງ Bill 3

3) ໃບຄິດໄລ່ລາຄາທີ 4 (Bill 4): ລາຄາກໍ່ສ້າງຫ້ອງານສົ່ງນ້ຳດິບ ແລະ ໃບຄິດໄລ່ລາຄາທີ 5 (Bill 5): ລາຄາກໍ່ສ້າງໂຮງງານຜະລິດນ້ຳປະປາ ແລະ ອ່າງເກັບນ້ຳ ແມ່ນນຳໃຊ້ໄຟລ໌ເອເລັກໂຕຼນິກ Excel ຊື່ວ່າ “Bill 4 ແລະ 5” ມີແຜງເມນູ ດັ່ງສະແດງໃນຮູບລຸ່ມນີ້:




**ຮູບທີ 3:** ແຜງເມນູ ໂປຼແກຼມຄິດໄລ່ຂອງ Bill 4 ແລະ 5

4) ໃບຄິດໄລ່ລາຄາທີ 6 (Bill 6): ລາຄາ ອຸປະກອນ ແລະ ຕິດຕັ້ງເຄື່ອງກົນຈັກ ແມ່ນນໍາໃຊ້ ໄຟລ໌ເອເລັກໂຕຼນິກ Excel ຊື່ວ່າ "Bill 6" ມີແຜງເມນູ ດັ່ງສະແດງໃນຮູບລຸ່ມນີ້:




**ຮູບທີ 4:** ແຜງເມນູ ໂປຼແກຼມຄິດໄລ່ຂອງ Bill 6

| MPWT<br>DWS<br>( WSD ) | NAME OF CONSULTANT | NAME OF PROJECT<br>TOWN/PROVINCE | DRAWING TITLE | DRAFTED & DESIGNED BY :<br>CHECKED BY :<br>APPROVED BY :<br>APPROVED BY | REVISION | DATE | Reservoir. example<br>DWG NO. XXX<br>SCALE: N.T.S |
|---|---|---|---|---|---|---|---|




Section 1-1



Elevated reservoir, Elevation

| | | | | | | | |
|---|---|---|---|---|---|---|---|
| MPWT ( WSD ) | NAME OF CONSULTANT | NAME OF PROJECT | DRAWING TITLE | DRAFTED & DESIGNED BY : | REVISION | DATE | Elevated tank, example |
| | | | | CHECKED BY : | | | |
| | | TOWN/PROVINCE | | APPROVED BY : | | | DWG NO. |
| | | | | APPROVED BY | | | SCALE: N.T.S |


Air valve
Collar
Collar
HWL
MPWT
DWS
( WSD )
NAME OF CONSULTANT
NAME OF PROJECT
TOWN/PROVINCE
DRAWING TITLE
DRAFTED & DESIGNED BY :
CHECKED BY :
APPROVED BY :
APPROVED BY
REVISION
DATE
pipe bridge. example
DWG NO. XXX
SCALE: N.T.S




| | | | | | | | |
|---|---|---|---|---|---|---|---|
| MPWT<br>DWS<br>( WSD ) | NAME OF CONSULTANT | NAME OF PROJECT<br>TOWN/PROVINCE | DRAWING TITLE | DRAFTED & DESIGNED BY :<br>CHECKED BY :<br>APPROVED BY :<br>APPROVED BY | REVISION | DATE | Ground water well, example<br>DWG NO. XXX<br>SCALE: N.T.S |


DETAIL 4
SCALE 1:50
BOLT #16
GATE VALVE
CLAM STEEL PLATE 80x5mm
TEE 45° GSP DN 150mm
VIEW
TEE 45° DN 150
STAIR
CLAM STEEL PLATE 80x5mm
BOLT #16
CONCRETE PILE 0.15x0.15x3m
SECTION 1-1
DN 150 GSP PIPE
RC. SUPPORT BLOCK
ROCK
ROCK
CLAY
CLAY
DN 150 GSP
132.77
129.80
126.65
124.15
122.15
119.10
HWL=131.00
SEE DETAIL 4
REINFORCE CONCRETE COLUMN
CONCRETE PILE 0.15x0.15x3m
R.C SUPPORT BLOCK
SEE DETAIL 3
DETAIL 3
SCALE 1:50
FLEXIBLE PILE
FLOATING PONTOON
LWL=121.842
CONCRETE BLOCK
134
132
130
128
126
124
122
120
118
116
DATUM ELEV
115.000
GROUND LEVEL
133.50
133.50
133.37
132.86
132.25
131.56
130.87
130.17
129.59
129.01
128.44
127.87
127.29
126.72
126.23
125.79
125.35
124.91
124.47
124.03
123.59
123.15
122.77
122.40
122.02
121.58
121.15
0
2
4
6
8
10
12
14
16
18
20
22
24
26
SECTION-C
Pontoon Intake
MPWT
DWS
( WSD )
NAME OF CONSULTANT
NAME OF PROJECT
TOWN/PROVINCE
DRAWING TITLE
DRAFTED & DESIGNED BY :
CHECKED BY :
APPROVED BY :
APPROVED BY
REVISION
DATE
Pontoon intake, example
DWG NO. XXX
SCALE: N.T.S




| | | | | | | | |
|---|---|---|---|---|---|---|---|
| MPWT<br>DWS<br>( WSD ) | NAME OF CONSULTANT | NAME OF PROJECT<br>TOWN/PROVINCE | DRAWING TITLE | DRAFTED & DESIGNED BY : | REVISION | DATE | Intake gate, example |
| | | | | CHECKED BY : | | | |
| | | | | APPROVED BY : | | | DWG NO. XXX |
| | | | | APPROVED BY | | | SCALE: N.T.S |

| ROAD CROSSING | | FOOTPATH | |
|---|---|---|---|
| GSP/PVC 13-30mm | GSP/DIP/ST 75-700mm<br>PVC 40mm | GSP/PVC 13-30mm | GSP/DIP/ST 75-700mm<br>PVC 40-300mm |







GSP/PVC 13-30mm — GSP/DIP/ST 75-700mm, PVC 40mm (Road crossing)

GSP/PVC 13-30mm — GSP/DIP/ST 75-700mm, PVC 40-300mm (Footpath)

SIDE OF ROAD




PVC 40-300mm
DIP/GSP/ST 75-700mm

| PIPE DIA(d) | | TRENCH DEPTH (H) Cm | | | | | | | | | | | | TRENCH WIDTH (B) Cm | |
|---|---|---|---|---|---|---|---|---|---|---|---|---|---|---|---|
| DN | | DIP/GSP/ST | | | | | | PVC | | | | | | ROAD CROSSING AND FOOTPATH | |
| | | CROSSING | | SIDE OF ROAD | | FOOTPATH | | CROSSING | | SIDE OF ROAD | | FOOTPATH | | | |
| Inch | mm | h Cm | H Cm | h Cm | H Cm | h Cm | H Cm | h Cm | H Cm | h Cm | H Cm | h Cm | H Cm | B1 Cm | B2 Cm |
| 1/2 | 13 | | 70 | | 60 | | 40 | | 70 | | 60 | | 50 | 15 | 20 |
| 3/4 | 20 | | 70 | | 60 | | 40 | | 70 | | 60 | | 50 | 15 | 20 |
| 1 | 25 | | 80 | | 70 | | 50 | | 80 | | 70 | | 60 | 15 | 25 |
| 1/4 | 30 | | 80 | | 70 | | 50 | | 80 | | 70 | | 60 | 15 | 25 |
| 3/4 | 40 | | 100 | | 80 | | 60 | 75 | 99 | 66 | 90 | 46 | 70 | 20 | 35 |
| 2 | 50 | | 100 | | 80 | | 60 | 75 | 100 | 65 | 90 | 45 | 70 | 20 | 35 |
| 3 | 75 | 80 | 108 | 70 | 98 | 50 | 78 | 90 | 118 | 80 | 108 | 57 | 85 | 25 | 40 |
| 4 | 100 | 80 | 110 | 70 | 100 | 50 | 80 | 90 | 120 | 90 | 110 | 60 | 90 | 30 | 45 |
| 6 | 150 | 110 | 145 | 100 | 135 | 80 | 115 | 120 | 155 | 110 | 145 | 115 | 125 | 35 | 50 |
| 8 | 200 | 120 | 160 | 110 | 150 | 90 | 130 | 130 | 170 | 120 | 160 | 100 | 140 | 40 | 60 |

## STANDARD CROSS-SECTION TRENCH

FOR CAPITAL CITY / WATER SUPPLY

| MPWT DWS ( WSD ) | NAME OF CONSULTANT | NAME OF PROJECT<br>TOWN/PROVINCE | DRAWING TITLE | DRAFTED & DESIGNED BY :<br>CHECKED BY :<br>APPROVED BY :<br>APPROVED BY | REVISED(explaination) | DATE | CROSS-SECTION TRENCH<br>DWG NO. XXX<br>SCALE: N.T.S |
|---|---|---|---|---|---|---|---|




MANHOLE (A)

| | | | | | | | |
|---|---|---|---|---|---|---|---|
| MPWT<br>DWS<br>( WSD ) | NAME OF CONSULTANT | NAME OF PROJECT<br>TOWN/PROVINCE | DRAWING TITLE | DRAFTED & DESIGNED BY :<br>CHECKED BY :<br>APPROVED BY :<br>APPROVED BY | REVISED(explaination) | DATE | Air valve, simple standard<br>DWG NO. XXX<br>SCALE: 1:20 |




| DN (mm) | BENDS 90° | | | | | | | BENDS 45° | | | | | | | BENDS 22°30' | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | A (mm) | B (mm) | C (mm) | D (mm) | E (mm) | F (mm) | VOLUME ($m^3$) | A (mm) | B (mm) | C (mm) | D (mm) | E (mm) | F (mm) | VOLUME ($m^3$) | A (mm) | B (mm) | C (mm) | D (mm) | E (mm) | F (mm) | VOLUME ($m^3$) |
| 75 | 400 | 400 | 400 | 300 | 80 | 300 | 0.0352 | 300 | 300 | 300 | 300 | 60 | 100 | 0.0228 | 300 | 300 | 300 | 100 | 100 | 100 | 0.0208 |
| 100 | 500 | 500 | 450 | 300 | 100 | 300 | 0.0644 | 300 | 400 | 400 | 300 | 100 | 100 | 0.0348 | 300 | 300 | 400 | 160 | 100 | 100 | 0.0218 |
| 150 | 700 | 700 | 600 | 300 | 180 | 250 | 0.1244 | 500 | 500 | 500 | 300 | 160 | 150 | 0.0668 | 400 | 400 | 600 | 160 | 160 | 250 | 0.0384 |
| 200 | 950 | 950 | 600 | 300 | 300 | 250 | 0.2325 | 700 | 700 | 600 | 300 | 300 | 150 | 0.1475 | 500 | 500 | 600 | 160 | 200 | 250 | 0.0612 |
| 250 | 1200 | 1200 | 800 | 350 | 400 | 250 | 0.4148 | 850 | 800 | 600 | 350 | 400 | 150 | 0.2140 | 600 | 600 | 600 | 160 | 250 | 250 | 0.0788 |

| | | | | | | | |
|---|---|---|---|---|---|---|---|
| MPWT<br>DWS<br>( WSD ) | NAME OF CONSULTANT | NAME OF PROJECT<br>TOWN/PROVINCE | DRAWING TITLE | DRAFTED & DESIGNED BY :<br>CHECKED BY :<br>APPROVED BY :<br>APPROVED BY | REVISED(explaination) | DATE | THRUST BLOCK, simple standard<br>DWG NO. XXX<br>SCALE: 1:25 |




**DEAD END**
Scale 1/25




**TEE**
Scale 1/25

**TABLE OF DIMENSIONS TEE (DN BRANCH)**

| DN (mm) | A (mm) | B (mm) | C (mm) | D (mm) | E (mm) | F (mm) | VOLUME ($m^3$) |
|---|---|---|---|---|---|---|---|
| 50 | - | - | - | - | - | - | - |
| 75 | 300 | 300 | 350 | 200 | 75 | 100 | 0.0210 |
| 100 | 400 | 400 | 400 | 200 | 100 | 150 | 0.0370 |
| 150 | 600 | 400 | 600 | 250 | 150 | 200 | 0.0670 |
| 200 | 600 | 800 | 800 | 300 | 200 | 250 | 0.1610 |
| 250 | 1000 | 1000 | 1000 | 350 | 250 | 300 | 0.6105 |




**SECTION 4-4**
Scale 1/25




**SECTION 5-5**
Scale 1/25

**TABLE OF DIMENSIONS DEAD END**

| DN (mm) | A (mm) | B (mm) | C (mm) | D (mm) | E (mm) | F (mm) | VOLUME ($m^3$) |
|---|---|---|---|---|---|---|---|
| 50 | - | - | - | - | - | - | - |
| 75 | 300 | 300 | 400 | 175 | 800 | 100 | 0.013 |
| 100 | 400 | 400 | 500 | 200 | 300 | 150 | 0.039 |
| 150 | 600 | 400 | 600 | 250 | 400 | 200 | 0.150 |
| 200 | 600 | 800 | 900 | 300 | 600 | 250 | 0.324 |
| 250 | 1000 | 1000 | 1000 | 350 | 800 | 300 | 0.690 |

**NOTES:**

- ALL DIMENSIONS ARE IN (mm)
- CONCRETE GRADE 25 Mpa
- STEEL BARS GRADE SD 40

| | | | | | | | |
|---|---|---|---|---|---|---|---|
| MPWT<br>DWS<br>( WSD ) | NAME OF CONSULTANT | NAME OF PROJECT<br>TOWN/PROVINCE | DRAWING TITLE | DRAFTED & DESIGNED BY :<br>CHECKED BY :<br>APPROVED BY :<br>APPROVED BY | REVISED(explaination) | DATE | THRUST BLOCK, tee and dead end<br>DWG NO. XXX<br>SCALE: 1:25 |




| | | | | | | | |
|---|---|---|---|---|---|---|---|
| MPWT<br>DWS<br>( WSD ) | NAME OF CONSULTANT | NAME OF PROJECT<br>TOWN/PROVINCE | DRAWING TITLE | DRAFTED & DESIGNED BY :<br>CHECKED BY :<br>APPROVED BY :<br>APPROVED BY | REVISION | DATE | PIPE SUPPORT<br>DWG NO. XXX<br>SCALE: N.T.S |

## 9. ເອກະສານອ້າງອີງ


1. ຄູ່ມືແນະນຳ ກ່ຽວກັບການນຳໃຊ້ລາຄາຫົວໜ່ວຍ ກິດຈະການ ກໍ່ສ້າງ ແລະ ປັບປຸງ ລະບົບນໍ້າປະປາ ຂົວ-ທາງ ສະບັບເລກທີ 30305/ຍທຂ.ກຂທ ລົງວັນທີ 19 ພະຈິກ 2019;
2. ຮ່າງ ລາຄາຫົວໜ່ວຍວຽກປ້ອງກັນຕະຝັ່ງແຄມແມ່ນໍ້າ;
3. ຮ່າງ ລາຄາຫົວໜ່ວຍກໍ່ສ້າງເຄຫາສະຖານ;
4. ລາຄາຫົວໜ່ວຍກໍ່ສ້າງສຳເລັດຮູບ VARIABLE CONSTRUCTION UNIT COST Presented By Mr. Handyman, 2003 (ປະເທດໄທ);
5. COST ESTIMATION Methods and Tools, by Gregory K. Mislick Daniel A. Nussbaum, Wiley, 2015.

## 10. ເອກະສານທີ່ກ່ຽວຂ້ອງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---ooooo---

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ: 16221/ຍທຂ

ນະຄອນຫຼວງວຽງຈັນ, ວັນທີ: 11-08-2016

### ຂໍ້ຕົກລົງ

**ຂອງລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງຄະນະປັບປຸງລາຄາຫົວໜ່ວຍ ກໍ່ສ້າງ-ສ້ອມແປງ ກິດຈະການຂອງຂະແໜງການ ໂຍທາທິການ ແລະ ຂົນສົ່ງ**

- ອີງຕາມດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 373/ນຍ, ລົງວັນທີ 22/10/2007.
- ອີງຕາມບົດບັນທຶກກອງປະຊຸມຄົ້ນຄ້ວາປຶກສາຫາລືກ່ຽວກັບການດຳເນີນມາດຕະການການແກ້ໄຂ 18 ບັນຫາຄົງຄ້າງ ຂອງຂະແໜງການ ຍທຂ ຄັ້ງວັນທີ 16/06/2016.

**ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ຕົກລົງ:**

ມາດຕາ 01: ແຕ່ງຕັ້ງຄະນະຄົ້ນຄ້ວາປັບປຸງລາຄາລາຄາຫົວໜ່ວຍກໍ່ສ້າງ-ສ້ອມແປງ ກິດຈະການຂອງຂະແໜງການ ໂຍທາທິການ ແລະ ຂົນສົ່ງ ດັ່ງມີລາຍຊື່ດັ່ງນີ້:

❑ ຄະນະຊີ້ນຳລວມ:

1) ທ່ານ ມັດ ສຸນມາລາ, ຜູ້ຊ່ວຍລັດຖະມົນຕີ — ເປັນຫົວໜ້າຄະນະ
2) ທ່ານ ສຈ.ປອ. ບຸນເຫຼື່ອມ ສີສຸລາດ, ຜູ້ຊ່ວຍລັດຖະມົນຕີ — ເປັນຮອງຫົວໜ້າຄະນະ
3) ທ່ານ ປອ. ອຸໄລ ພະດວງເດດ, ຫົວໜ້າກົມແຜນການ ແລະການຮ່ວມມື — ເປັນຄະນະ
4) ທ່ານ ງາມປະສົງ ເມືອງມະນີ, ຫົວໜ້າກົມນິຕິກຳ — ເປັນຄະນະ
5) ທ່ານ ລົດ ສຸກສີວົງໄຊ, ຮອງຫົວໜ້າກົມກວດກາ — ເປັນຄະນະ
6) ທ່ານ ແສງທະວີໄສ ມະລີວັນ, ຮອງຫົວໜ້າກົມທາງລົດໄຟ — ເປັນຄະນະ

❑ ຄະນະໜ່ວຍງານຄົ້ນຄ້ວາລາຄາຫົວໜ່ວຍຂົວ-ທາງ:

1) ທ່ານ ແພງ ດວງເງິນ, ຫົວໜ້າກົມຂົວທາງ — ເປັນຫົວໜ້າຄະນະ
2) ທ່ານ ປີທອງ ໂງ່ນພະຈັນ, ຮອງຫົວໜ້າກົມຂົວທາງ — ເປັນຮອງຫົວໜ້າຄະນະ
3) ທ່ານ ລິນແສງ ທອງມະນີລາ, ຮອງຫົວໜ້າກົມກວດກາ — ເປັນຄະນະ
4) ທ່ານ ພູເພື່ອນ ແສງພະຈັນ, ຜູ້ອຳນວຍການ ບສ ກໍ່ສ້າງຂົວທາງເລກ 8 — ເປັນຄະນະ
5) ທ່ານ ທອນອ່ອນ ກອງຍິນໄຊ, ອະດີດຜູ້ອຳນວຍການ ບສ ກໍ່ສ້າງຂົວທາງເລກ 20 — ເປັນຄະນະ
6) ທ່ານ ພອນພະນາ ພຣົມມາລາ, ຮອງພະແນກເຕັກນິກ, ກົມຂົວທາງ — ເປັນຄະນະ

❑ ຄະນະໜ່ວຍງານຄົ້ນຄ້ວາລາຄາຫົວໜ່ວຍໂຍທາທິການທາງນ້ຳ:

1) ທ່ານ ຮຸ່ງຫຼ້າ ແສນເມືອງ, ຫົວໜ້າກົມໂຍທາທິການທາງນ້ຳ — ເປັນຫົວໜ້າຄະນະ
2) ທ່ານ ບົວພັນ ເທດດາວັນ, ຮອງຫົວໜ້າກົມໂຍທາທິການທາງນ້ຳ — ເປັນຮອງຫົວໜ້າຄະນະ
3) ທ່ານ ຄຳແສງ ອາລີ, ຮອງພະແນກປ້ອງກັນຕະຝັ່ງເຈື່ອນ, ກົມໂຍທາທິການທາງນ້ຳ — ເປັນຄະນະ

- ຄະນະໜ່ວຍງານຄົ້ນຄ້ວາລາຄາຫົວໜ່ວຍການບິນພົນລະເຮືອນ:
  1) ທ່ານ ວັນເພັງ ຈັນທະພອນ, ຫົວໜ້າກົມການບິນພົນລະເຮືອນ ເປັນຫົວໜ້າຄະນະ
  2) ທ່ານ ສັກດາ ສຸລິສັກ, ຫົວໜ້າພະແນກ, ກົມການບິນພົນລະເຮືອນ ເປັນຮອງຫົວໜ້າຄະນະ
  3) ທ່ານ ອານຸສັກ ກິດຕິລາດ, ກົມການບິນພົນລະເຮືອນ ເປັນຄະນະ

- ຄະນະໜ່ວຍງານຄົ້ນຄ້ວາລາຄາຫົວໜ່ວຍການຂົນສົ່ງ-ໂດຍສານທາງບົກ:
  1) ທ່ານ ວຽງສະຫວັດ ສີພັນດອນ, ຫົວໜ້າກົມຂົນສົ່ງ ເປັນຫົວໜ້າຄະນະ
  2) ທ່ານ ບຸນຕາ ອ່ອນນາວົງ, ຮອງຫົວໜ້າກົມຂົນສົ່ງ ເປັນຮອງຫົວໜ້າຄະນະ
  3) ທ່ານ ວິໄລພັນ ໄຊຍະວົງ, ຮອງຫົວໜ້າກົມຂົນສົ່ງ ເປັນຄະນະ
  4) ທ່ານ ຕຸ້ຍ ພົມມະສີງ, ກົມຂົນສົ່ງ ເປັນຄະນະ

- ຄະນະໜ່ວຍງານຄົ້ນຄ້ວາລາຄາຫົວໜ່ວຍກໍ່ສ້າງເຄຫະສະຖານ ແລະ ນໍ້າປະປາ:
  1) ທ່ານ **ສຈ.ປອ. ບຸນເຫຼືອມ ສີສຸລາດ**, ຜູ້ຊ່ວຍລັດຖະມົນຕີ ເປັນຫົວໜ້າຄະນະ
     (ລົງເລິກຊີ້ນໍາວຽກລາຄາຫົວໜ່ວຍກໍ່ສ້າງເຄຫາສະຖານ)
  2) ທ່ານ **ສຈ.ປອ. ສົມພອນ ເດດອຸດົມ**, ຜູ້ຊ່ວຍລັດຖະມົນຕີ ເປັນຮອງຫົວໜ້າຄະນະ
     (ລົງເລິກຊີ້ນໍາວຽກລາຄາຫົວໜ່ວຍກໍ່ສ້າງວຽກນໍ້າປະປາ)
  3) ທ່ານ ຄໍາທະວີ ໄທພະຈັນ, ຫົວໜ້າກົມເຄຫາ-ຜັງເມືອງ ເປັນຄະນະ
  4) ທ່ານ ພົມມາ ແວວລາວັນ, ຫົວໜ້າກົມນໍ້າປະປາ ເປັນຄະນະ
  5) ທ່ານ ໜູເຜືອກ ວິລະບຸດ, ຮອງຫົວໜ້ານໍ້າປະປາ ເປັນຄະນະ
  6) ທ່ານ ສົມວັນ ມົງພະຈັນ, ຮອງຫົວໜ້າກົມເຄຫາ-ຜັງເມືອງ ເປັນຄະນະ

- ຄະນະໜ່ວຍງານກອງເລຂາ, ຊ່ວຍວຽກບໍລິຫານ ແລະ ງົບປະມານຂອງຄະນະ:
  1) ທ່ານ ໄລທອງ ພົມມະວົງ, ຮອງພະແນກເຕັກນິກ, ກົມຂົວທາງ ເປັນຫົວໜ້າຄະນະ
  2) ທ່ານ ອານົງເດດ ເພັດໄກສອນ, ຮອງພະແນກແຜນການ, ກຜຮ ເປັນຮອງຄະນະ
  3) ທ່ານ ຄໍາປະສິດ ພິລະສັກ, ວິຊາການ, ກົມໂຍທາທິການທາງນໍ້າ ເປັນຄະນະ
  4) ທ່ານ ສາພອນ ພູມທະວີ, ຫົວໜ້າຂະແໜງທາງນໍ້າ, ສະຖາບັນຝຶກອົບຮົມ ຍທຂ ເປັນຄະນະ
  5) ທ່ານ ໄຊຊະນະ ແກ້ວອຸດົມ, ວິຊາການ, ກົມແຜນການ ແລະ ການຮ່ວມມື ເປັນຄະນະ
  6) ທ່ານ ໄຊສຸວັນ ສົມວົງສາ, ວິຊາການ, ກົມແຜນການ ແລະ ການຮ່ວມມື ເປັນຄະນະ
  7) ທ່ານ ຕຸລາໄຊ ພັນທະວົງ, ວິຊາການ, ກົມແຜນການ ແລະ ການຮ່ວມມື ເປັນຄະນະ

ມາດຕາ 02: ຄະນະດັ່ງກ່າວມີໜ້າທີ່ຄື:

- ສ້າງແຜນດໍາເນີນງານ ແລະ ວາງແຜນຈັດຕັ້ງປະຕິບັດການຄົ້ນຄ້ວາ ໂດຍໃຫ້ເລີ່ມຈາກບັນດາກົມທີ່ກ່ຽວຂ້ອງຢ່າງເປັນລະບົບ ແລະ ໃຫ້ກໍານົດຄາດໝາຍເວລາທີ່ຈະສໍາເລັດ ເພື່ອເປັນມາດຖານໃນການຈັດຕັ້ງປະຕິບັດ.
- ກວດແກ້ ແລະ ຮຽບຮຽງຄືນບັນດາຫຼັກການ ແລະ ສູດຄິດໄລ່ ຕ່າງໆ ທີ່ຄະນະຄົ້ນຄ້ວາຊຸດເກົ່າໄດ້ສັງລວມ ເພື່ອໃຫ້ສອດຄ່ອງກັບວຽກງານຕົວຈິງ.
- ສັງລວມລາຍງານຜົນການຄົ້ນຄ້ວາຂອງຄະນະດັ່ງກ່າວ.
- ຄະນະໜ່ວຍງານຄົ້ນຄ້ວາຂອງແຕ່ລະຂະແໜງ ມີສິດແຕ່ງຕັ້ງໜ່ວຍງານຊ່ວຍວຽກຂອງຕົນເພີ່ມ ຖ້າເຫັນວ່າມີຄວາມຈໍາເປັນ.

ມາດຕາ 03: ງົບປະມານທັງໝົດໃນການຈັດຕັ້ງປະຕິບັດວຽກງານຄົ້ນຄ້ວາດັ່ງກ່າວ ແມ່ນໃຫ້ນໍາໃຊ້ງົບປະມານບໍລິຫານຂອງກະຊວງ.

ມາດຕາ 04: ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດຕົວຈິງ.

ມາດຕາ 05: ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງສະບັບເລກທີ 486/ຍທຂ, ລົງວັນທີ 16/6/2014 ແລະ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ດຣ ບຸນຈັນ ສິນທະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ກົມນ້ຳປະປາ

ເລກທີ 376 /ກນປ

ນະຄອນຫຼວງວຽງຈັນ, ວັນທີ 01 . ກໍລະກົດ 2020

# ຂໍ້ຕົກລົງ

## ຂອງຫົວໜ້າກົມນ້ຳປະປາ

ວ່າດ້ວຍ ການແຕ່ງຕັ້ງຄະນະຊີ້ນຳລວມ ແລະ ຄະນະຮັບຜິດຊອບ

ຄົ້ນຄວ້າ ກ່ຽວກັບ ລາຄາຫົວໜ່ວຍກໍ່ສ້າງ ຂະແໜງນ້ຳປະປາ

- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເລກທີ 27257/ຍທຂ ລົງວັນທີ 08 ທັນວາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມນ້ຳປະປາ;
- ອີງຕາມ ການຄົ້ນຄວ້າເຫັນດີ ເປັນເອກະພາບ ຂອງຄະນະກົມນ້ຳປະປາ.

## ຫົວໜ້າກົມນ້ຳປະປາ ຕົກລົງ :

**ມາດຕາ 1:** ແຕ່ງຕັ້ງຄະນະຊີ້ນຳລວມ ແລະ ຄະນະຮັບຜິດຊອບ ຄົ້ນຄວ້າ ກ່ຽວກັບລາຄາຫົວໜ່ວຍກໍ່ສ້າງ ຂະແໜງນ້ຳປະປາ, ເຊິ່ງປະກອບດ້ວຍບັນດາທ່ານດັ່ງນີ້:

1. ທ່ານ ນາງ ສີລິລັດ ພັນທະວົງ ຮອງຫົວໜ້າ ກົມນ້ຳປະປາ ຫົວໜ້າຄະນະ;
2. ທ່ານ ຂັນທອນ ວໍຣະຈິດ ຫົວໜ້າພະແນກ ກົມນ້ຳປະປາ ຮອງຫົວໜ້າຄະນະ;
3. ທ່ານ ວໍລະສິດ ແດງກາຍຍະພິຈິດ ຮອງຫົວໜ້າພະແນກ ກົມນ້ຳປະປາ ຄະນະ;
4. ທ່ານ ຈັນຖະໜອມ ດວງດາຣາ ວິຊາການ, ກົມນ້ຳປະປາ ຄະນະ;
5. ທ່ານ ສົມໃຈ ອິນດາວົງ ວິຊາການ, ກົມນ້ຳປະປາ ເລຂາ;
6. ທ່ານ ນາງ ທິບພະພອນ ແສງສຸທະລິນ ວິຊາການ, ກົມນ້ຳປະປາ ຜູ້ຊ່ວຍວຽກເລຂາ.

**ມາດຕາ 2:** ຄະນະທີ່ຖືກແຕ່ງຕັ້ງ ມີໜ້າທີ່ຮັບຜິດຊອບໃນການຄົ້ນຄວ້າ ວຽກງານດັ່ງກ່າວໃຫ້ສຳເລັດຕາມເວລາທີ່ກຳນົດໄວ້;

**ມາດຕາ 3:** ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຜູ້ຖືກແຕ່ງຕັ້ງເພື່ອປະຕິບັດວຽກງານໃຫ້ສຳເລັດຜົນເປັນຢ່າງດີ;

**ມາດຕາ 4:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມ

ສົມປອງ ສິດທິວົງ

ບ່ອນນຳສົ່ງ:

- ພະແນກຈັດຕັ້ງ ແລະ ບໍລິຫານ 1 ສະບັບ
- ພາກສ່ວນກ່ຽວຂ້ອງ 1 ສະບັບ
- ພວກກ່ຽວ 1 ສະບັບ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ 15088/ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 21 ກໍລະກົດ 2020

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍ ການແຕ່ງຕັ້ງຄະນະຊີ້ນໍາລວມ ແລະ ຄະນະວິຊາການຄົ້ນຄວ້າ ສ້າງນິຕິກໍາໃຕ້ກົດໝາຍ ວ່າດ້ວຍ ນໍ້າປະປາ ໃນ ສປປ ລາວ

- ອີງຕາມ ດໍາລັດຂອງ ນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 295/ນຍ ລົງວັນທີ 04 ກັນຍາ 2017;
- ອີງຕາມບົດບັນທຶກກອງປະຊຸມ ກະຊວງໂຍທາທິການ ແລະ ຂົນສົ່ງ ປະຈໍາເດືອນ ພະຈິກ 2019 ແລະ ແຈ້ງການຂອງ ຫ້ອງການກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 34158/ຫກ.ສລພ ລົງວັນທີ 18 ທັນວາ 2019;
- ອີງຕາມ ໃບສະເໜີ ຂອງກົມນໍ້າປະປາ ສະບັບເລກທີ 10366/ຍທຂ.ກນປ ລົງວັນທີ 26 ພຶດສະພາ 2020.

## ລັດຖະມົນຕີ ຕົກລົງ:

**ມາດຕາ 1:** ແຕ່ງຕັ້ງຄະນະຊີ້ນໍາລວມ ສ້າງນິຕິກໍາໃຕ້ກົດໝາຍ ວ່າດ້ວຍ ນໍ້າປະປາ ໃນ ສປປ ລາວ ເຊິ່ງປະກອບດ້ວຍບັນດາທ່ານ ດັ່ງລຸ່ມນີ້:

| | | | |
|---|---|---|---|
| 1. | ທ່ານ ນ. ວິໄລຄໍາ ໂພສາລາດ | ຮອງລັດຖະມົນຕີ | ຫົວໜ້າຄະນະ |
| 2. | ທ່ານ ງາມປະສົງ ເມືອງມະນີ | ຫົວໜ້າກົມນິຕິກໍາ | ຮອງຄະນະ |
| 3. | ທ່ານ ສົມປອງ ສິດທິວົງ | ຫົວໜ້າກົມນໍ້າປະປາ | ຄະນະ |

* ຄະນະດັ່ງກ່າວມີໜ້າທີ່ຕົ້ນຕໍ ດັ່ງນີ້:

1). ຄົ້ນຄວ້າ ແລະ ຮັບຮອງເອົາການສ້າງແຜນການ ເພື່ອດໍາເນີນການສ້າງ ຮ່າງນິຕິກໍາໃຕ້ກົດໝາຍ ວ່າດ້ວຍ ນໍ້າປະປາ ຕາມການສະເໜີຂອງຄະນະວິຊາການ ແລະ ກອງເລຂາ;

2). ຊີ້ນໍາຄະນະວິຊາການ ຈັດຕັ້ງກອງປະຊຸມ ເພື່ອກະກຽມຮ່າງ ເນື້ອໃນນິຕິກໍາໃຕ້ກົດໝາຍ ວ່າດ້ວຍ ນໍ້າປະປາ ແລະ ຈັດກອງປະຊຸມ ເພື່ອຄົ້ນຄວ້າປະກອບຄໍາເຫັນ;

3). ສະຫຼຸບ ສັງລວມເນື້ອໃນ ນິຕິກໍາໃຕ້ກົດໝາຍ ວ່າດ້ວຍ ນໍ້າປະປາ ທີ່ຜ່ານການຄົ້ນຄວ້າປະກອບຄໍາເຫັນ ຈາກກອງປະຊຸມລະດັບຕ່າງໆ ພ້ອມທັງເປັນເຈົ້າການຮຽບຮຽງໃຫ້ລະອຽດ;

4). ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ເພື່ອສໍາເລັດ ຮ່າງນິຕິກໍາໃຕ້ກົດໝາຍ ວ່າດ້ວຍ ນໍ້າປະປາ;

5). ປະຕິບັດໜ້າທີ່ຕື່ມຈໍານວນໜຶ່ງ ຕາມການຊີ້ນໍາຂອງ ລັດຖະມົນຕີ ໃນແຕ່ລະໄລຍະ.

**ມາດຕາ 2:** ແຕ່ງຕັ້ງຄະນະວິຊາການຄົ້ນຄວ້າ ສ້າງນິຕິກຳໃຕ້ກົດໝາຍ ວ່າດ້ວຍ ນ້ຳປະປາ ໃນ ສປປ ລາວ ເຊິ່ງປະກອບດ້ວຍບັນດາທ່ານ ດັ່ງລຸ່ມນີ້:

| | | | |
|---|---|---|---|
| 1. | ທ່ານ ນ. ສີວິລັດ ພັນທະວົງ | ຮອງຫົວໜ້າກົມນ້ຳປະປາ | ຫົວໜ້າຄະນະ |
| 2. | ທ່ານ ຂັນທອນ ວໍຣະຈິດ | ຫົວໜ້າພະແນກ, ກົມນ້ຳປະປາ | ຮອງຄະນະ |
| 3. | ທ່ານ ສະເຫຼີມສັກ ໄຊຍະມຸງຄຸນ | ຫົວໜ້າພະແນກ, ກົມນ້ຳປະປາ | ຄະນະ |
| 4. | ທ່ານ ສິດທິພອນ ບຸບຜາວັນ | ຫົວໜ້າພະແນກ, ກົມນິຕິກຳ | ຄະນະ |
| 5. | ທ່ານ ນ. ພູວັນ ແສນບຸດຕະລາດ | ຫົວໜ້າພະແນກ, ກົມນ້ຳປະປາ | ຄະນະ |
| 6. | ທ່ານ ຄຳພູວົງ ສີໂຄລົມ | ຫົວໜ້າພະແນກ, ກົມນ້ຳປະປາ | ຄະນະ |
| 7. | ທ່ານ ວິລະສັກ ລິດທະວົງ | ຫົວໜ້າພະແນກ, ກົມນ້ຳປະປາ | ຄະນະ |
| 8. | ທ່ານ ແສງສະຫວາດ ສິດລາກອນ | ຫົວໜ້າພະແນກ, ກົມນ້ຳປະປາ | ຄະນະ |
| 9. | ທ່ານ ສົມໃຈ ອິນດາວົງ | ວິຊາການ, ກົມນ້ຳປະປາ | ຄະນະ |

* ຄະນະດັ່ງກ່າວມີໜ້າທີ່ຕົ້ນຕໍ ດັ່ງນີ້:

1). ຈັດຕັ້ງກອງປະຊຸມ ເພື່ອຄົ້ນຄວ້າ ສ້າງຮ່າງນິຕິກຳໃຕ້ກົດໝາຍ ວ່າດ້ວຍ ນ້ຳປະປາ ໃຫ້ສຳເລັດຕາມແຜນການ;

2). ສະຫຼຸບສັງລວມ ເນື້ອໃນຮ່າງນິຕິກຳໃຕ້ກົດໝາຍ ວ່າດ້ວຍ ນ້ຳປະປາ ຜ່ານການປະກອບຄຳເຫັນໃນກອງປະຊຸມ ແລະ ປັບປຸງໃຫ້ຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ ແລະ ສອດຄ່ອງກັບກົດໝາຍຕ່າງໆຂອງລັດ ທີ່ປະກາດໃຊ້ຜ່ານມາ ເພື່ອສະເໜີໃຫ້ຄະນະຊີ້ນຳພິຈາລະນາ;

3). ປະສານສົມທົບ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອປຶກສາຫາລື ຮ່າງນິຕິກຳໃຕ້ກົດໝາຍ ວ່າດ້ວຍ ນ້ຳປະປາ;

4). ປະຕິບັດວຽກງານຕື່ມຈຳນວນໜຶ່ງ ຕາມການມອບໝາຍ ຂອງຄະນະຊີ້ນຳ.

**ມາດຕາ 3:** ແຕ່ງຕັ້ງຄະນະກອງເລຂາ ເພື່ອເປັນຜູ້ຊ່ວຍວຽກຄົ້ນຄວ້າ ດັ່ງມີລາຍຊື່ລຸ່ມນີ້:

| | | | |
|---|---|---|---|
| 1. | ທ່ານ ນ. ຈັນປະເສີດ ທອງສີສະຫວັດ | ຮອງຫົວໜ້າພະແນກ, ກົມນ້ຳປະປາ | ຫົວໜ້າຄະນະ |
| 2. | ທ່ານ ສີພະຈັນ ຊຸມພົນພັກດີ | ຮອງຫົວໜ້າພະແນກ, ກົມນ້ຳປະປາ | ຮອງຄະນະ |
| 3. | ທ່ານ ນ. ສຸກໄພວັນ ໄຊຍະວົງ | ວິຊາການ, ກົມນ້ຳປະປາ | ຄະນະ |
| 4. | ທ່ານ ນ. ພູເງິນ ພົມມະລີນ | ວິຊາການ, ກົມນ້ຳປະປາ | ຄະນະ |
| 5. | ທ່ານ ຕຸ້ຍ ໄຊວິເຊືອງ | ວິຊາການ, ກົມນ້ຳປະປາ | ຄະນະ |
| 6. | ທ່ານ ຄຳພອງ ວັນວິໄລ | ວິຊາການ, ກົມນ້ຳປະປາ | ຄະນະ |

* ຄະນະດັ່ງກ່າວມີໜ້າທີ່ຕົ້ນຕໍ ດັ່ງນີ້:

1). ສ້າງແຜນການເຄື່ອນໄຫວວຽກງານ ແລະ ແຜນການໃຊ້ຈ່າຍງົບປະມານ ຂອງການສ້າງ ຮ່າງນິຕິກຳໃຕ້ກົດໝາຍ ວ່າດ້ວຍ ນ້ຳປະປາ ດັ່ງກ່າວ ເພື່ອສະເໜີຄະນະຊີ້ນຳພິຈາລະນາ;

2). ກະກຽມເອກະສານຕ່າງໆ ໃຫ້ແກ່ກອງປະຊຸມ ແລະ ວຽກງານບໍລິຫານທັງໝົດ ຂອງຄະນະຊີ້ນຳ ແລະ ຄະນະວິຊາການ;

3). ເປັນເຈົ້າການ ສ້າງບົດບັນທຶກ ແລະ ສະຫຼຸບສັງລວມ ຄຳເຫັນຕ່າງໆຂອງກອງປະຊຸມ ຂອງຄະນະຊີ້ນຳ ແລະ ຄະນະວິຊາການ ໃນແຕ່ລະຄັ້ງ;

4). ປະຕິບັດໜ້າທີ່ຈຳນວນໜຶ່ງ ຕາມການຊີ້ນຳຂອງຄະນະຊີ້ນຳ ແລະ ຄະນະວິຊາການ.

**ມາດຕາ 4:** ຄ່າໃຊ້ຈ່າຍຕ່າງໆ ເພື່ອຮັບໃຊ້ວຽກງານສ້າງນິຕິກຳໃຕ້ກົດໝາຍ ວ່າດ້ວຍ ນ້ຳປະປາ ທັງໝົດ ແມ່ນນຳໃຊ້ງົບປະມານ ຮ່ວງບໍລິຫານຂອງກົມນ້ຳປະປາ ປະຈຳແຕ່ລະປີ, ໂດຍມີການສ້າງແຜນການໃຊ້ຈ່າຍ ແລະ ຂໍອະນຸມັດຕາມວິໄນ ແຜນການ ແລະ ການເງິນ.

**ມາດຕາ 5:** ສຳລັບໜ້າທີ່ລະອຽດ ມອບໃຫ້ຫົວໜ້າຄະນະຊີ້ນຳ ແລະ ບັນດາທ່ານໃນຄະນະວິຊາການ ປຶກສາຫາລື ມອບໝາຍກັນລະອຽດຕື່ມ.

**ມາດຕາ 6:** ບັນດາທ່ານທີ່ຖືກແຕ່ງຕັ້ງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ມາດຕາ 7:** ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ປອ. ບຸນຈັນ ສິນທະວົງ

ບ່ອນສົ່ງ:

- ກົມຈັດຕັ້ງພະນັກງານ 1 ສະບັບ
- ຫ້ອງການກະຊວງ 1 ສະບັບ
- ພາກສ່ວນກ່ຽວຂ້ອງບ່ອນລະ 1 ສະບັບ
- ສຳເນົາ 1 ສະບັບ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມນ້ຳປະປາ

ນະຄອນຫຼວງວຽງຈັນ, ວັນທີ ໒໒.ມັງກອນ.໒໐໒໑

## ບົດບັນທຶກກອງປະຊຸມ

ປະກອບຄຳເຫັນໃສ່ ຮ່າງ ຂໍ້ຕົກລົງ ມາດຕະຖານເຕັກນິກຂອງລະບົບໂຄງລ່າງນ້ຳປະປາ, ບົດແນະນຳທາງດ້ານເຕັກນິກ ມາດຕະຖານລະບົບໂຄງລ່າງນ້ຳປະປາ ແລະ ລາຄາຫົວໜ່ວຍກໍ່ສ້າງ-ສ້ອມແປງ ວຽກງານນ້ຳປະປາ.

ໃນຕອນເຊົ້າ ຂອງວັນທີ 22 ທັນວາ 2020 ເວລາ 08:30 ທີ່ຫ້ອງປະຊຸມສະໂມສອນເຂື່ອນໄຟຟ້ານ້ຳງື່ມ 01 ເມືອງແກ້ວອຸດົມ ແຂວງວຽງຈັນ, ກົມນ້ຳປະປາ ໄດ້ຈັດກອງປະຊຸມ ປະກອບຄຳເຫັນໃສ່ ຮ່າງ ຂໍ້ຕົກລົງ ມາດຕະຖານລະບົບໂຄງລ່າງນ້ຳປະປາ, ບົດແນະນຳທາງດ້ານເຕັກນິກ ມາດຕະຖານລະບົບໂຄງລ່າງນ້ຳປະປາ ແລະ ລາຄາຫົວໜ່ວຍກໍ່ສ້າງ-ສ້ອມແປງ ວຽກງານນ້ຳປະປາ; ໄດ້ດຳເນີນເປັນເວລາ 2 ວັນ ເລີ່ມແຕ່ 22-23 ທັນວາ 2020 ໂດຍການເປັນປະທານຂອງ ທ່ານ ສົມປອງ ສິດທິວົງ ຫົວໜ້າກົມນ້ຳປະປາ; ມີຜູ້ເຂົ້າຮ່ວມ ມາຈາກ ກົມກອງອ້ອມຂ້າງກະຊວງ, ກົມນ້ຳປະປາ, ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ແລະ ນະຄອນຫຼວງວຽງຈັນ, ລັດວິສາຫະກິດນ້ຳປະປາໃນຂອບເຂດທົ່ວປະເທດ ແລະ ຕາງໜ້າຈາກບໍລິສັດເອກະຊົນ, ພ້ອມທີມງານຊ່ວຍຊານໂຄງການ ພັດທະນາຄວາມອາດສາມາດ ດ້ານການຄຸ້ມຄອງ ໃຫ້ແກ່ຂະແໜງນ້ຳປະປາ ໄລຍະທີ 2 (MaWaSU2), (ລາຍຊື່ຜູ້ເຂົ້າຮ່ວມຄັດຕິດມາພ້ອມນີ້).

ພາຍຫຼັງ ທ່ານ ປະທານ ໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ ແລະ ໄດ້ມີຄຳເຫັນຊີ້ນຳຕໍ່ກອງປະຊຸມ ໂດຍໄດ້ເນັ້ນເຖິງ ຄວາມໝາຍຄວາມສຳຄັນ ແລະ ຄວາມຈຳເປັນ ຂອງການສ້າງຮ່າງມາດຕະຖານເຕັກນິກລະບົບໂຄງລ່າງນ້ຳປະປາ ແລະ ລາຄາຫົວໜ່ວຍກໍ່ສ້າງ-ສ້ອມແປງ ວຽກງານນ້ຳປະປາ ເພື່ອການນຳໃຊ້ໃຫ້ເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ; ຫຼັງຈາກນັ້ນ ຄະນະຮັບຜິດຊອບ ໄດ້ສະເໜີຫຍໍ້ ກ່ຽວກັບເນື້ອໃນເອກະສານ ດັ່ງນີ້:

1. ສັງລວມຫຍໍ້ ກ່ຽວກັບ ຄວາມເປັນມາ ຂອງການສ້າງ (ຮ່າງ) ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍ ມາດຕະຖານເຕັກນິກ ຂອງລະບົບໂຄງລ່າງນ້ຳປະປາໃນ ສປປ ລາວ, (ຮ່າງ) ບົດແນະນຳມາດຕະຖານເຕັກນິກ ລະບົບໂຄງລ່າງນ້ຳປະປາ ແລະ (ຮ່າງ) ລາຄາຫົວໜ່ວຍກໍ່ສ້າງ ແລະ ສ້ອມແປງ ວຽກງານນ້ຳປະປາ;
2. ນຳສະເໜີລາຍລະອຽດ (ຮ່າງ) ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍ ມາດຕະຖານເຕັກນິກ ຂອງລະບົບໂຄງລ່າງນ້ຳປະປາໃນ ສປປ ລາວ;
3. ນຳສະເໜີລາຍລະອຽດ (ຮ່າງ) ບົດແນະນຳທາງດ້ານເຕັກນິກມາດຕະຖານລະບົບໂຄງລ່າງນ້ຳປະປາ;
4. ນຳສະເໜີລາຍລະອຽດ (ຮ່າງ) ລາຄາຫົວໜ່ວຍກໍ່ສ້າງ-ສ້ອມແປງ ວຽກງານນ້ຳປະປາ.

ພາຍຫຼັງໄດ້ຮັບຟັງການນຳສະເໜີ ແຕ່ລະຫົວຂໍ້ ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ເອົາໃຈໃສ່ປະກອບຄຳເຫັນ ຢ່າງມີບັນຍາກາດຟົດຟື້ນ ດ້ວຍຄວາມຮັບຜິດຊອບສູງ ແລະ ເຫັນວ່າຮ່າງເອກະສານດັ່ງກ່າວ ມີເນື້ອໃນຄົບຖ້ວນດີພໍ

ສົມຄວນ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ, ແຕ່ມີບາງຈຸດທີ່ຈະຕ້ອງໄດ້ປັບປຸງຕື່ມ ເຊິ່ງສາມາດສັງລວມໄດ້ດັ່ງນີ້:

1. **ຮ່າງ ຂໍ້ກຳນົດ ມາດຕະຖານເຕັກນິກ ຂອງລະບົບໄຖງລ່າງນ້ຳປະປາ:**
   1) ສະເໜີໃຫ້ເອົາ ຮ່າງຂໍ້ກຳນົດ ມາດຕະຖານເຕັກນິກ ຂອງລະບົບໄຖງລ່າງນ້ຳປະປາ ໄປລວມໃສ່ປຶ້ມແນະນຳທາງດ້ານເຕັກນິກ ມາດຕະຖານລະບົບໄຖງລ່າງນ້ຳປະປາ;
   2) ສະເໜີໃຫ້ ຫົວໜ້າກົມນ້ຳປະປາ ລາຍງານ ຄະນະນຳກະຊວງ ເພື່ອພິຈາລະນາຂໍອະນຸມັດນຳໃຊ້ ມາດຕະຖານເຕັກນິກລະບົບໄຖງລ່າງນ້ຳປະປາ;
2. **ຮ່າງ ປຶ້ມແນະນຳທາງດ້ານເຕັກນິກ ມາດຕະຖານລະບົບໄຖງລ່າງນ້ຳປະປາ:**
   1) ສະເໜີໃຫ້ມີເອກະສານຊ້ອນທ້າຍອ້າງອີງ ກ່ຽວກັບ ສູດການຄິດໄລ່, ການປັບປຸງຄຳສັບ, ນິຍາມຄຳສັບ, ຮູບພາບ ແລະ ແປເປັນພາສາລາວ;
   2) ພາກທີ 9: ອຸປະກອນສຳລັບການສະໜອງນ້ຳ, ສະເໜີເພີ່ມ:
      - ອາຍຸການນຳໃຊ້ ອຸປະກອນຕິດຕັ້ງໝໍ້ແທກນ້ຳ ເຂົ້າຄົວເຮືອນ.
3. **ຮ່າງ ລາຄາຫົວໜ່ວຍກໍ່ສ້າງ-ສ້ອມແປງ ວຽກງານນ້ຳປະປາ:**
   1) ລາຄາທາງກົງ (ໜ້າທີ 3): ກ່ຽວກັບລາຄາວັດສະດຸ ແລະ ອຸປະກອນ, ສະເໜີເພີ່ມ:
      - ການນຳໃຊ້ ລາຄາວັດສະດຸ ແລະ ອຸປະກອນ ເຂົ້າໃນໂຄງສ້າງລາຄາຫົວໜ່ວຍ ທັງໝົດເປັນເງິນກີບ;
   2) ລາຄາທາງອ້ອມ (ໜ້າທີ 3): ສະເໜີໃຫ້ປ່ຽນເນື້ອໃນ:
      - ກົດໝາຍ ວ່າດ້ວຍ ການຄຸ້ມຄອງສ່ວຍສາອາກອນ ເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015 ປ່ຽນເປັນ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019 ປັບປຸງໃໝ່ ປີ 2019;
   3) ຂໍ້ທີ 3.1 (ໜ້າທີ 12): ການນຳໃຊ້ລາຄາຫົວໜ່ວຍ, ສະເໜີເພີ່ມ:
      - ລາຍລະອຽດອັດຕາດອກເບ້ຍ 3,5% ໃຫ້ແຍກການຄິດໄລ່ອອກເປັນຫຼາຍທາງເລືອກ ກໍລະນີຈ່າຍປີດຽວ ແລະ ກໍລະນີແບ່ງຈ່າຍເປັນຫຼາຍປີ;
   4) ສະເໜີໃຫ້ມີເອກະສານຊ້ອນທ້າຍ ກ່ຽວກັບໂຄງສ້າງລາຄາຫົວໜ່ວຍ ແລະ ລົງເລິກຄົ້ນຄວ້າຄິດໄລ່ຄ່າຂົນສົ່ງແບກຫາບ ດ້ວຍແຮງງານຄົນ ແລະ ແຮງງານສັດລາກແກ່ ພາຍໃນແຂວງເຂົ້າຕື່ມ;
   5) ສະເໜີ ໃຫ້ຄິດໄລ່ອັດຕາເງິນເຟີ້ ແລະ ລາຄາຫົວໜ່ວຍ ໃນແຕ່ລະປີໃສ່ນຳຕື່ມ;
   6) ສະເໜີໃຫ້ກຳນົດລາຍລະອຽດ ລາຍການຍ່ອຍ ກ່ຽວກັບວຽກ ສຳຫຼວດອອກແບບ, ວ່າຈ້າງທີ່ປຶກສາ ແລະ ຄ່າຄຸ້ມຄອງໂຄງການ;
   7) ໃຫ້ມີລາຄາຫົວໜ່ວຍ ເປັນລາຄາກາງ ທີ່ ເປັນເອກະພາບກັນທົ່ວປະເທດ ເພື່ອນຳໄປໃຊ້ໃນການຕິດຕາມກວດກາ ໂຄງການທີ່ກ່ຽວຂ້ອງ;
   8) ສະເໜີໃຫ້ ພະແນກ ຍທຂ ແລະ ລັດວິສາຫະກິດນ້ຳປະປາ ທົດລອງໃຊ້ໄປແຖຼມ ແລະ ຊ່ວຍກວດກາຄວາມຖືກຕ້ອງ ຂອງໂຄງສ້າງລາຄາຫົວໜ່ວຍ ແລ້ວຕອບກັບໃຫ້ກົມນ້ຳປະປາ ເພື່ອພິຈາລະນາປັບປຸງພາຍໃນ 01 ອາທິດ;
   9) ສະເໜີໃຫ້ ກົມນ້ຳປະປາ ເຜີຍແຜ່ ແລະ ນຳພາສ້າງລາຄາຫົວໜ່ວຍ ເປັນແຕ່ລະແຂວງ.

ຫຼັງຈາກກອງປະຊຸມ ໄດ້ມີການປຶກສາຫາລື ແລກປ່ຽນຄຳຄິດ ປະທານກອງປະຊຸມ ກໍໄດ້ມີການສະຫຼຸບ ຜົນໄດ້ຮັບຂອງກອງປະຊຸມ ດັ່ງມີລາຍລະອຽດລຸ່ມນີ້:

1. **ຮ່າງ ຂໍ້ກຳນົດມາດຕະຖານເຕັກນິກ ໃນການອອກແບບລະບົບໄຖງລ່າງນ້ຳປະປາ.**
   1) ເຫັນດີເອົາ ໝວດທີ 2: ມາດຕະຖານລະບົບໄຖງລ່າງນ້ຳປະປາ ຂອງຮ່າງ ຂໍ້ກຳນົດ ໄປລວມໃສ່ໃນປຶ້ມແນະນຳມາດຕະຖານເຕັກນິກ ຂອງລະບົບໄຖງລ່າງນ້ຳປະປາ;

2) ເຫັນດີໃຫ້ມີເອກະສານອ້າງອີງເພີ່ມຕື່ມໃສ່ ໃນປຶດແນະນຳມາດຕະຖານເຕັກນິກລະບົບໂຄງລ່າງນໍ້າປະປາ ແລະ ການຄິດໄລ່ລາຄາຫົວໜ່ວຍ ເພື່ອເປັນເອກະສານຊ້ອນທ້າຍ ເຊັ່ນ: ສູດການຄິດໄລ່, ການໃຊ້ສັບພາສາຕ່າງປະເທດ ທຽບກັບພາສາລາວ;

3) ເຫັນດີໃຫ້ ກົມນໍ້າປະປາ ລາຍງານ ຄະນະນຳກະຊວງ ຍທຂ ເພື່ອຂໍອະນຸມັດນຳໃຊ້ ມາດຕະຖານເຕັກນິກລະບົບໂຄງລ່າງນໍ້າປະປາ.

2. **ຮ່າງ ລາຄາຫົວໜ່ວຍກໍ່ສ້າງ-ສ້ອມແປງ ວຽກງານນໍ້າປະປາ:**

1) ເຫັນດີ ໃຫ້ສັງລວມຂັ້ນຕອນ ວິທີການແຍກລາຍການ ໃນປະເມີນລາຄາ ຂອງໂຄງການ ໃນການຄິດໄລ່ລາຄາຫົວໜ່ວຍ;

2) ໃຫ້ພະແນກ ຍທຂ ແລະ ລັດວິສາຫະກິດນໍ້າປະປາ ໄປທົດລອງນຳໃຊ້ໃນແຖວ ວ່າມີຄວາມສະດວກ ແລະ ຫຍຸ້ງຍາກ ແນວໃດ? ແລ້ວຕອບກັບກົມນໍ້າປະປາ ພາຍໃນ 01 ອາທິດ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຂັ້ນຕໍ່ໄປ.

**ປະທານກອງປະຊຸມ** **ຜູ້ບັນທຶກ**

ສົມປອງ ສິດທິວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມນ້ຳປະປາ

ເລກທີ..01628....../ຍທຂ.ກນປ

ນະຄອນຫຼວງວຽງຈັນ, ວັນທີ..25..ມັງກອນ..2021

**ຮຽນ: ທ່ານ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ທີ່ນັບຖືຢ່າງສູງ,**

**ເລື່ອງ: ລາຍງານຜົນສຳເລັດກອງປະຊຸມປະກອບຄຳເຫັນ ຮ່າງ ຂໍ້ຕົກລົງ ມາດຕະຖານເຕັກນິກຂອງລະບົບໂຄງລ່າງນ້ຳປະປາ, ປຶ້ມແນະນຳທາງດ້ານເຕັກນິກມາດຕະຖານລະບົບໂຄງລ່າງນ້ຳປະປາ ແລະ ລາຄາຫົວໜ່ວຍກໍ່ສ້າງ-ສ້ອມແປງ ວຽກງານນ້ຳປະປາ**

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເລກທີ 27257/ຍທຂ, ລົງວັນທີ 08 ທັນວາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມນ້ຳປະປາ;
- ອີງຕາມ ຂໍ້ຕົກລົງ ຂອງ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 32522/ຍທຂ, ລົງວັນທີ 04 ທັນວາ 2019 ວ່າດ້ວຍ ການອະນຸມັດຈັດກອງປະຊຸມ;
- ອີງຕາມ ບົດບັນທຶກກອງປະຊຸມ ປະກອບຄຳເຫັນໃສ່ ຮ່າງ ຂໍ້ຕົກລົງ ມາດຕະຖານເຕັກນິກຂອງລະບົບໂຄງລ່າງນ້ຳປະປາ, ປຶ້ມແນະນຳທາງດ້ານເຕັກນິກ ມາດຕະຖານລະບົບໂຄງລ່າງນ້ຳປະປາ ແລະ ລາຄາຫົວໜ່ວຍກໍ່ສ້າງສ້ອມແປງ ວຽກງານນ້ຳປະປາ, ຄັ້ງວັນທີ 22 ມັງກອນ 2021;
- ອີງຕາມ ການຕົກລົງເຫັນດີ ຂອງ ຄະນະພັກ ແລະ ຄະນະກົມນ້ຳປະປາ.

ກົມນ້ຳປະປາ ຂໍຖືເປັນກຽດ ຢ່າງສູງລາຍງານມາຍັງທ່ານຊາບວ່າ: ຜົນຂອງການຈັດກອງປະຊຸມ ປະກອບຄຳເຫັນໃສ່ ຮ່າງຂໍ້ຕົກລົງມາດຕະຖານເຕັກນິກຂອງລະບົບໂຄງລ່າງນ້ຳປະປາ, ປຶ້ມແນະນຳທາງດ້ານເຕັກນິກມາດຕະຖານລະບົບໂຄງລ່າງນ້ຳປະປາ ແລະ ລາຄາຫົວໜ່ວຍກໍ່ສ້າງ-ສ້ອມແປງ ວຽກງານນ້ຳປະປາ ຊຶ່ງໄດ້ດຳເນີນເປັນເວລາ 2 ວັນ ແຕ່ວັນທີ 22-23 ທັນວາ 2020. ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ເອົາໃຈໃສ່ ປະກອບຄຳເຫັນ ຢ່າງມີບັນຍາກາດຟົດຟື້ນ ດ້ວຍຄວາມຮັບຜິດຊອບສູງ ແລະ ເຫັນວ່າຮ່າງເອກະສານດັ່ງກ່າວ ມີເນື້ອໃນຄົບຖ້ວນດີພໍສົມຄວນ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ, ແຕ່ມີບາງຈຸດທີ່ຈະຕ້ອງໄດ້ປັບປຸງຕື່ມ ເຊິ່ງສາມາດສັງລວມໄດ້ ດັ່ງນີ້:

## I. ການປະກອບຄຳເຫັນ

ດ້ານເນື້ອໃນ ແລະ ໂຄງສ້າງ ຂອງຮ່າງຂໍ້ກຳນົດມາດຕະຖານເຕັກນິກ ໃນການອອກແບບລະບົບໂຄງລ່າງນ້ຳປະປາ ແລະ ລາຄາຫົວໜ່ວຍກໍ່ສ້າງ-ສ້ອມແປງ ວຽກງານນ້ຳປະປາ ໂດຍລວມແມ່ນເຫັນດີເປັນເອກະພາບຕໍ່ການນຳສະເໜີ ຂອງກົມນ້ຳປະປາ ທີ່ມີເນື້ອໃນສົມບູນ ແລະ ຄົບຖ້ວນໂດຍສອດຄ່ອງກັບສະພາວະຄວາມເປັນຈິງ ແຕ່ມີບາງຈຸດທີ່ຈະຕ້ອງໄດ້ປັບປຸງຕື່ມ ດັ່ງລຸ່ມນີ້:

**1. ຮ່າງ ຂໍ້ກຳນົດມາດຕະຖານເຕັກນິກ ໃນການອອກແບບລະບົບໂຄງລ່າງນ້ຳປະປາ:**

1) ເຫັນດີເອົາ ໝວດທີ 2: ມາດຕະຖານລະບົບໂຄງລ່າງນ້ຳປະປາ ຂອງຮ່າງ ຂໍ້ຕົກລົງ ໄປລວມໃສ່ໃນປຶ້ມແນະນຳມາດຖານເຕັກນິກຂອງລະບົບໂຄງລ່າງນ້ຳປະປາ;
2) ເຫັນດີໃຫ້ມີເອກະສານອ້າງອີງ ກ່ຽວກັບ ສູດການຄິດໄລ່, ການປັບປຸງຄຳສັບ, ນິຍາມຄຳສັບ, ຮູບພາບ ແລະ ແປເປັນພາສາລາວ;

3) ໃຫ້ກົມນ້ຳປະປາ ລາຍງານ ຄະນະນຳກະຊວງ ຍທຂ ເພື່ອຂໍອະນຸມັດນຳໃຊ້ ມາດຕະຖານເຕັກນິກລະບົບໄຖງລ່າງນ້ຳປະປາ.

2. ຮ່າງ ລາຄາຫົວໜ່ວຍກໍ່ສ້າງ-ສ້ອມແປງ ວຽກງານນ້ຳປະປາ:

1) ເຫັນດີສັງລວມຂັ້ນຕອນ ວິທີການແຍກລາຍການ ໃບປະເມີນລາຄາ ຂອງໂຄງການ ໃນການຄິດໄລ່ລາຄາຫົວໜ່ວຍ;

2) ໃຫ້ພະແນກ ຍທຂ ແລະ ລັດວິສາຫະກິດນ້ຳປະປາ ໄປທົດລອງນຳໃຊ້ໂປຼແກຼມ ວ່າມີຄວາມສະດວກ ແລະ ຫຍຸ້ງຍາກ ແນວໃດ? ແລ້ວຕອບກັບກົມນ້ຳປະປາ ພາຍໃນ 01 ອາທິດ.

## II. ບົດຮຽນຖອດຖອນໄດ້

ຜ່ານການຈັດກອງປະຊຸມເປັນໄລຍະເວລາ 2 ວັນ ເຫັນວ່າ ດ້ານເວລາມີຄວາມເໝາະສົມ, ການນຳສະເໜີເອກະສານລາຍງານຢູ່ໃນວາລະກອງປະຊຸມ ສາມາດດຳເນີນໄປໄດ້ຕາມເວລາກຳນົດ; ຜູ້ແທນເຂົ້າຮ່ວມມີເວລາພຽງພໍ ສາມາດປະກອບຄຳເຫັນ ແລະ ແລກປ່ຽນບົດຮຽນ ໃສ່ຮ່າງຂໍ້ຕົກລົງມາດຕະຖານເຕັກນິກຂອງລະບົບໄຖງລ່າງນ້ຳປະປາ, ບົດແນະນຳທາງດ້ານເຕັກນິກມາດຕະຖານລະບົບໄຖງລ່າງນ້ຳປະປາ ແລະ ລາຄາຫົວໜ່ວຍກໍ່ສ້າງ-ສ້ອມແປງ ວຽກງານນ້ຳປະປາ ໂດຍສາມາດສັງລວມ ແລະ ສະຫຼຸບບົດຮຽນທີ່ຖອດຖອນໄດ້ ເພື່ອນຳເອົາບົດປະກອບຄຳເຫັນດັ່ງກ່າວມາປັບປຸງໃສ່ຮ່າງດັ່ງກ່າວ ໃຫ້ມີຄວາມສົມບູນຂຶ້ນ.

## III. ງົບປະມານນຳໃຊ້ທັງໝົດ

ງົບປະມານນຳໃຊ້ຈັດກອງປະຊຸມ ແມ່ນມາຈາກງົບປະມານ ກົມນ້ຳປະປາ ພາກ 63 ຈຳນວນ 92.056.800 ກີບ;

## IV. ຂໍ້ສະເໜີ:

ກອງປະຊຸມດັ່ງກ່າວ ມີປະໂຫຍດແກ່ຂະແໜງນ້ຳປະປາ ຄວນໃຫ້ໄດ້ ຮັບຮອງ ແລະ ປະກາດນຳໃຊ້ ຂໍ້ກຳນົດມາດຕະຖານເຕັກນິກ ໃນການອອກແບບລະບົບໄຖງລ່າງນ້ຳປະປາ ແລະ ລາຄາຫົວໜ່ວຍກໍ່ສ້າງ-ສ້ອມແປງ ວຽກງານນ້ຳປະປາ ແລະ ໃຫ້ຈັດຝຶກອົບຮົມວິທີນຳໃຊ້ ແລະ ໂຄງສ້າງສູດການຄິດໄລ່ ໃຫ້ເຂົ້າໃຈ, ນຳໃຊ້ຖືກຕ້ອງ ແລະ ເປັນເອກະພາບກັນທົ່ວປະເທດ.

ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານ ເພື່ອຮັບຊາບ ແລະ ຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດຂັ້ນຕໍ່ໄປ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

ຫົວໜ້າກົມ

ກົມນ້ຳປະປາ

ສົມປອງ ສິດທິວົງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໂຍທາທິການ ແລະ ຂົນສົ່ງ

## ບົດບັນທຶກກອງປະຊຸມ
### ປະກອບຄຳເຫັນ ໃສ່ໂຄງປະກອບ ລາຄາຫົວໜ່ວຍວຽກງານ ກໍ່ສ້າງ ແລະ ປັບປຸງ ລະບົບນ້ຳປະປາ.

- ອີງຕາມ ໜັງສືທາງລັດຖະການ ຈາກຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 457/ຫສນຍ, ລົງວັນທີ 02 ກັນຍາ 2021.

ໃນເວລາ 8:30 ໂມງ ຂອງວັນທີ 15 ກັນຍາ 2021 ທີ່ຫ້ອງປະຊຸມ ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ຈັດກອງປະຊຸມ ຄົ້ນຄວ້າປຶກສາຫາລື ປະກອບຄຳເຫັນໃສ່ ໂຄງປະກອບ ລາຄາຫົວໜ່ວຍ ກິດຈະການ ກໍ່ສ້າງ ແລະ ສ້ອມແປງລະບົບນ້ຳປະປາ. ພາຍໃຕ້ການເປັນປະທານຂອງ **ທ່ານ ນາງ ວີໄລຄຳ ໂພສາລາດ** ຮອງລັດຖະມົນຕີ ກະຊວງ ໂຍທາທິການ ແລະ ຂົນສົ່ງ ເຊິ່ງມີ ທ່ານຫົວໜ້າກົມນິຕິກຳ, ຫົວໜ້າ-ຮອງຫົວໜ້າກົມນ້ຳປະປາ , ທ່ານຮອງຫົວໜ້າຫ້ອງການກະຊວງ ຍທຂ, ຜູ້ຕາງໜ້າຈາກ ກະຊວງ ແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງ ອຸດສະຫະກຳ ແລະ ການຄ້າ, ກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງຍຸຕິທຳ, ຄະນະວິສະວະກຳສາດ ແລະ ຄະນະສະຖາປັດຕະຍະກຳສາດ ມະຫາວິທະຍາໄລແຫ່ງຊາດ, ປະທານສະມາຄົມນ້ຳປະປາລາວ ແລະ ວິຊາການ ທີ່ກ່ຽວຂ້ອງເຂົ້າຮ່ວມ (ມີລາຍຊື່ຄັດຕິດມາພ້ອມນີ້).

ພາຍຫຼັງ ທ່ານປະທານກອງປະຊຸມ ໄດ້ກ່າວເປີດ ແລະ ແຈ້ງຈຸດປະສົງ ຂອງກອງປະຊຸມແລ້ວ ທ່ານ ສົມປອງ ສິດທິວົງ ຫົວໜ້າກົມນ້ຳປະປາ ກໍໄດ້ລາຍງານຄວາມເປັນມາ ຂອງການຄົ້ນຄວ້າໂຄງປະກອບ ລາຄາຫົວໜ່ວຍ ກິດຈະການ ກໍ່ສ້າງ ແລະ ສ້ອມແປງລະບົບນ້ຳປະປາ, ຈາກນັ້ນ ທ່ານ ຂັນທອນ ວໍຣະຈິດ ຮອງຫົວໜ້າກົມ ກໍໄດ້ລາຍງານລາຍລະອຽດຂັ້ນຕອນ ການຄົ້ນຄວ້າ ໂຄງປະກອບ ແລະ ວິທີການ ນຳໃຊ້ໂປແກຣມ ໄຟຣ Excel ແລະ ສັງລວມຫຍໍ້ ປຶ້ມຄູ່ມື ທັງ 3 ເຫຼັ້ມ.

ຫຼັງຈາກນັ້ນ, ກອງປະຊຸມ ໄດ້ເປີດໃຫ້ຜູ້ເຂົ້າຮ່ວມ ປະກອບຄຳເຫັນ ທາງດ້ານວິຊາການ. ຜູ້ເຂົ້າຮ່ວມກອງປະຊຸມ ກໍໄດ້ປະກອບຄຳເຫັນ ຢ່າງກົງໄປກົງມາ ໂດຍຍົກໃຫ້ເຫັນ ເຖິງບັນຫາ ໃນການຈັດຕັ້ງປະຕິບັດຜ່ານມາ ແລະ ຄວາມຈຳເປັນ ໃນການນຳໃຊ້ລາຄາຫົວໜ່ວຍ ກໍ່ສ້າງວຽກງານ ນ້ຳປະປາ; ທ່ານ ປະທານກອງປະຊຸມ, ຄະນະກົມ ແລະ ຄະນະວິຊາການກົມນ້ຳປະປາ ກໍໄດ້ອະທິບາຍຊີ້ແຈງ ຕໍ່ຜູ້ເຂົ້າຮ່ວມ ໃຫ້ເຂົ້າໃຈເປັນເອກະພາບ ເພື່ອໃຫ້ລາຄາຫົວໜ່ວຍວຽກງານ ກໍ່ສ້າງ ແລະ ປັບປຸງລະບົບນ້ຳປະປາ ໄດ້ຖືກພິຈາລະນາ ຮັບຮອງ ແລະ ປະກາດ ນຳໃຊ້.

ກອງປະຊຸມ ໄດ້ຕົກລົງເຫັນດີ ແລະ ເປັນເອກະພາບກັນ ດັ່ງນີ້:

1. ເຫັນດີເປັນເອກະພາບໂດຍພື້ນຖານ ເພາະໄດ້ມີການຄົ້ນຄວ້າລະອຽດ ແລະ ຊັດເຈນສົມຄວນ ຕາມການລາຍງານຂອງ ກົມນ້ຳປະປາ ເຊິ່ງປະກອບມີ 3 ເຫຼັ້ມຄື: (1) ຮ່າງໂຄງສ້າງລາຄາ ແລະ ລາຄາຫົວໜ່ວຍ ວຽກງານກໍ່ສ້າງ ແລະ ປັບປຸງ ລະບົບນ້ຳປະປາ, (2) ບົດແນະນຳການນຳໃຊ້ລາຄາຫົວໜ່ວຍ ແລະ (3) ຕົວຢ່າງການນຳໃຊ້ລາຄາຫົວໜ່ວຍເຂົ້າໃນການຈັດຕັ້ງປະຕິບັດໂຄງການຕົວຈິງ;
2. ເຫັນດີກຳນົດ ເອົາລາຄາທາງອ້ອມຄື:
   - ກຳນົດກຳໄລ ແລະ ຄວາມສ່ຽງ ຂອງຜູ້ປະກອບການ 13% ຂອງຕົ້ນທຶນການກໍ່ສ້າງລະບົບນ້ຳປະປາ;
   - ຄ່າບໍລິຫານການກໍ່ສ້າງ 10%;
   - ການຄິດໄລ່ອາກອນມູນຄ່າເພີ່ມ 10% ຕາມກົດໝາຍອາກອນມູນຄ່າເພີ່ມ ມາດຕາ 17 ສະບັບ ເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018;

3. ມອບໃຫ້ ກົມນ້ຳປະປາ ເປັນເຈົ້າການໃນການຄົ້ນຄວ້າ ແລະ ປັບປຸງຕາມຄວາມເຫັນຂອງກອງປະຊຸມ ໃຫ້ສົມບູນຂຶ້ນ ຕາມຄວາມເໝາະສົມ;
4. ສະເໜີໃຫ້ແຕ່ລະພາກສ່ວນ ທີ່ປະກອບຄຳເຫັນ ສົ່ງຄຳເຫັນຂອງຕົນເປັນລາຍລັກອັກສອນໃຫ້ ກົມນ້ຳປະປາ ເພື່ອປັບປຸງ ໃຫ້ທັນຕາມກຳນົດເວລາ.

ກອງປະຊຸມ ໄດ້ເຫັນດີ ເປັນເອກະພາບ ກັນວ່າ ໂຄງປະກອບລາຄາຫົວໜ່ວຍ ວຽກງານກໍ່ສ້າງ ແລະ ປັບປຸງ ລະບົບນ້ຳປະປາ ເປັນລາຄາທີ່ເໝາະສົມ ຕາມເງື່ອນໄຂການສຳລະສະສາງ ພາຍຫຼັງວຽກກໍ່ສ້າງສຳເລັດໄລຍະຄ້ຳປະກັນໂຄງການ 1 ປີ ແລະ ເຫັນດີ ໃຫ້ນຳສະເໜີໂຄງປະກອບລາຄາ ດັ່ງກ່າວນີ້ ຕໍ່ການນຳກະຊວງ ໂຍທາທິການ ແລະ ຂົນສົ່ງ ເພື່ອສົ່ງໃຫ້ ຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ພິຈາລະນາ ຮັບຮອງ ແລະ ອະນຸມັດ ໃຫ້ນຳໃຊ້ລາຄາ ລາຄາຫົວໜ່ວຍ ວຽກງານກໍ່ສ້າງ ແລະ ປັບປຸງ ລະບົບນ້ຳປະປາ.

ກອງປະຊຸມໄດ້ສຳເລັດ ແລະ ປິດລົງໃນ ເວລາ 11:30 ຂອງວັນດຽວກັນ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ.

ຮອງລັດຖະມົນຕີ
ປະທານກອງປະຊຸມ



ວິໄລຄຳ ໂພສາລາດ

ຮອງຫົວໜ້າກົມນ້ຳປະປາ
ຜູ້ບັນທຶກກອງປະຊຸມ



ຂັນທອນ ວໍຣະຈິດ

ກະຊວງໂຍທາທິການ
ແລະ ຂົນສົ່ງ
ລົງເລກ
ເລກທີ: 20554
ວັນທີ: 14/10/2021

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ

ເລກທີ 1307/ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 13 ຕຸລາ 2021

# ແຈ້ງການ

ຮຽນ : ທ່ານ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ທີ່ນັບຖື. ✓

ເລື່ອງ : ທິດຊີ້ນໍາກ່ຽວກັບການສະເໜີຮັບຮອງ ແລະ ອະນຸມັດໃຫ້ນໍາໃຊ້ໂຄງປະກອບລາຄາຫົວໜ່ວຍວຽກງານກໍ່ສ້າງ ແລະ ປັບປຸງລະບົບນໍ້າປະປາ.

- ອີງຕາມ ດໍາລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 574/ນຍ, ລົງວັນທີ 28 ກັນຍາ 2021.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍລະບຽບການ ແລະ ກົນໄກການເຮັດວຽກ ຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ເມສາ 2021.
- ອີງຕາມ ເອກະສານລາຍງານ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 571/ຍທຂ, ລົງວັນທີ 20 ກັນຍາ 2021.
- ອີງຕາມ ການຊີ້ນໍາຂອງ ທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 7 ຕຸລາ 2021.

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນໍາຂອງ ທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້: " ເຫັນດີຮັບຮອງ ແລະ ອະນຸມັດໃຫ້ນໍາໃຊ້ໂຄງປະກອບລາຄາຫົວໜ່ວຍວຽກງານກໍ່ສ້າງ ແລະ ປັບປຸງລະບົບນໍ້າປະປາ ຢ່າງເປັນທາງການ ເພື່ອເປັນບ່ອນອີງໃນການຄຸ້ມຄອງໂຄງການກໍ່ສ້າງນໍ້າປະປາ ໃຫ້ມີຄວາມເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ ຕາມການສະເໜີຂອງກະຊວງໂຍທາທິການ ແລະ ຂົນສົ່ງ. "

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ
ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ຄໍາເຈນ ວົງໂພສີ

ປອນນໍາສົ່ງ:

1. ທ່ານນາຍົກ-ຮອງນາຍົກລັດຖະມົນຕີ ທ່ານລະ 01 ສະບັບ
2. ຫ້ອງວ່າການສູນກາງພັກ 01 ສະບັບ
3. ຫ້ອງວ່າການສໍານັກງານປະທານປະເທດ 01 ສະບັບ
4. ຄະນະເລຂາທິການສະພາແຫ່ງຊາດ 01 ສະບັບ
5. ຄະນະນໍາ ຫສນຍ ທ່ານລະ 01 ສະບັບ
6. ເກັບມ້ຽນ 04 ສະບັບ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ 21121/ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 21/10/2021

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງ ແລະ ປະກາດນໍາໃຊ້ ໂຄງປະກອບລາຄາຫົວໜ່ວຍ ວຽກງານກໍ່ສ້າງ ແລະ ປັບປຸງ ລະບົບນໍ້າປະປາ ແລະ ປຶ້ມແນະນໍາ ການນໍາໃຊ້ ລາຄາຫົວໜ່ວຍ ວຽກງານກໍ່ສ້າງ ແລະ ປັບປຸງ ລະບົບນໍ້າປະປາ

- ອີງຕາມ ດໍາລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 295/ນຍ, ລົງວັນທີ 04 ກັນຍາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 1307/ຫສນຍ, ລົງວັນທີ 13 ຕຸລາ 2021 ວ່າດ້ວຍທິດຊີ້ນໍາກ່ຽວກັບ ການສະເໜີຮັບຮອງ ແລະ ອະນຸມັດໃຫ້ນໍາໃຊ້ ໂຄງປະກອບລາຄາຫົວໜ່ວຍ ວຽກງານກໍ່ສ້າງ ແລະ ປັບປຸງລະບົບນໍ້າປະປາ.

ລັດຖະມົນຕີ ຕົກລົງ:

**ມາດຕາ 1:** ຮັບຮອງ ແລະ ປະກາດນໍາໃຊ້ ໂຄງປະກອບລາຄາຫົວໜ່ວຍ ວຽກງານກໍ່ສ້າງ ແລະ ປັບປຸງ ລະບົບນໍ້າປະປາ ແລະ ປຶ້ມແນະນໍາ ການນໍາໃຊ້ ລາຄາຫົວໜ່ວຍ ວຽກງານກໍ່ສ້າງ ແລະ ປັບປຸງ ລະບົບນໍ້າປະປາ ໃນຂອບເຂດທົ່ວປະເທດ ເພື່ອເປັນບ່ອນອີງໃຫ້ແກ່ ການຄິດໄລ່ລາຄາກາງ ເອກະສານການປະມູນຈັດຊື້-ຈັດຈ້າງ.

**ມາດຕາ 2:** ມອບໃຫ້ກົມນໍ້າປະປາ ເປັນເຈົ້າການສົມທົບກັບ ສະຖາບັນຝຶກອົບຮົມ ໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງການຝຶກອົບຮົມ ວິທີນໍາໃຊ້ລາຄາຫົວໜ່ວຍ ແລະ ໂຄງປະກອບສູດຄິດໄລ່ລາຄາຫົວໜ່ວຍ ໃຫ້ເຂົ້າໃຈ, ນໍາໃຊ້ໃຫ້ຖືກຕ້ອງ ແລະ ເປັນເອກະພາບກັນ.

**ມາດຕາ 3:** ຜ່ານການຈັດຕັ້ງປະຕິບັດ ໃຫ້ມີການສະຫຼຸບຖອດຖອນບົດຮຽນ ຖ້າບັນຫາໃດທີ່ເຫັນວ່າບໍ່ຖືກຕ້ອງ ແລະ ແທດເໝາະກັບສະພາບຕົວຈິງ ຫຼື ບັນຫາໃດທີ່ຍັງບໍ່ທັນຄົບຖ້ວນ ໃຫ້ຄົ້ນຄວ້າພິຈາລະນາ ແລະ ສະເໜີປັບປຸງຄືນຕື່ມ.

**ມາດຕາ 4:** ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສໍາເລັດເປັນຢ່າງດີ.

**ມາດຕາ 5:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ວຽງສະຫວັດ ສີພັນດອນ